ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------===000===---------

ສະພາແຫ່ງຊາດ ເລກທີ 02 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 26 ທັນວາ 2006

# ກົດໝາຍ

## ວ່າດ້ວຍງົບປະມານແຫ່ງລັດ

**(ສະບັບປັບປຸງ)**

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ກຳນົດ ຫລັກການ, ລະບຽບການ, ມາດຕະການ ກ່ຽວກັບການສ້າງແຜນ, ການຈັດຕັ້ງປະຕິບັດ, ການສະຫຼຸບ ແລະການກວດສອບ ງົບປະມານແຫ່ງລັດ ເພື່ອຄຸ້ມຄອງການເກັບລາຍຮັບເຂົ້າງົບປະມານ ໃຫ້ຖືກຕ້ອງ, ຄົບຖ້ວນ, ປະຕິບັດລາຍຈ່າຍງົບປະມານ ໃຫ້ໂປ່ງໃສ, ປະຢັດມັດທະຍັດ, ມີປະສິດທິຜົນ, ເປັນເອກະພາບໃນຂອບເຂດທົ່ວປະເທດ, ຍົກສູງຄວາມຮັບຜິດຊອບຂອງອົງການລັດທຸກຂັ້ນ, ເພີ່ມຖານແຫຼ່ງລາຍຮັບ, ສ້າງຄວາມເຂັ້ມແຂງທາງດ້ານການເງິນດ້ວຍຕົນເອງເທື່ອລະກ້າວ ເຮັດໃຫ້ການເງິນແຫ່ງຊາດ ມີສະເຖຍລະພາບ ແລະເຊື່ອມໂຍງເຂົ້າລະບົບການເງິນສາກົນ ແນໃສ່ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ຕໍ່ເນື່ອງ ແລະຍືນຍົງ.

### ມາດຕາ 2. ງົບປະມານແຫ່ງລັດ

ງົບປະມານແຫ່ງລັດ ແມ່ນການຄາດຄະເນແຜນ ລາຍຮັບ-ລາຍຈ່າຍຂອງລັດ ຊຶ່ງໄດ້ຮັບຮອງຈາກສະພາແຫ່ງຊາດໃນແຕ່ລະປີ. ງົບປະມານແຫ່ງລັດເປັນໃຈກາງຂອງລະບົບການເງິນແຫ່ງຊາດ, ເປັນເຄື່ອງມືຄຸ້ມຄອງ, ດັດສົມເສດຖະກິດມະຫາພາກ ເພື່ອຮັບປະກັນໃຫ້ເສດຖະກິດ-ສັງຄົມມີການພັດທະນາ.

### ມາດຕາ 3. ການອະທິບາຍຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

**1. ການດຸນດ່ຽງງົບປະມານແຫ່ງລັດ** ໝາຍເຖິງ ການສົມທຽບລະຫວ່າງ ຕົວເລກລວມຍອດລາຍຮັບກັບຕົວເລກລວມຍອດລາຍຈ່າຍ ງົບປະມານແຫ່ງລັດ ໃນໄລຍະເວລາໃດໜຶ່ງ ເມື່ອສົມທຽບແລ້ວ ຈະເຫັນໄດ້ຖານະງົບປະມານແຫ່ງລັດເກີດຂຶ້ນໃນ ສາມ ກໍລະນີດັ່ງນີ້:

- **ງົບປະມານສົມດຸນ** ໝາຍເຖິງ ງົບປະມານ ທີ່ມີຕົວເລກລວມຍອດລາຍຮັບ ເທົ່າກັບ ຕົວເລກລວມຍອດລາຍຈ່າຍ;
- **ງົບປະມານເກີນດຸນ** ໝາຍເຖິງ ງົບປະມານ ທີ່ມີຕົວເລກລວມຍອດລາຍຮັບ ຫຼາຍກວ່າ ຕົວເລກລວມຍອດລາຍຈ່າຍ;
- **ງົບປະມານຂາດດຸນ** ໝາຍເຖິງ ງົບປະມານ ທີ່ມີຕົວເລກລວມຍອດລາຍຮັບ ໜ້ອຍກວ່າ ຕົວເລກລວມຍອດລາຍຈ່າຍ.

**2. ການຊ່ວຍໜູນງົບປະມານ** ໝາຍເຖິງ ການຊ່ວຍໜູນຈາກງົບປະມານສູນກາງໃຫ້ງົບປະມານທ້ອງຖິ່ນ ທີ່ນອນໃນແຜນງົບປະມານແຫ່ງລັດປະຈຳສົກປີ ;

**3. ຫົວໜ່ວຍງົບປະມານ** ໝາຍເຖິງ ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ທີ່ໄດ້ຮັບມອບສິດຈາກລັດຖະບານ ໃນການສ້າງແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫລຸບງົບປະມານແຫ່ງລັດ ;

**4. ຜູ້ສັ່ງການເອກ** ໝາຍເຖິງ ລັດຖະມົນຕີວ່າການກະຊວງການເງິນ ທີ່ໄດ້ຮັບມອບສິດຈາກລັດຖະບານ ໃຫ້ຮັບຜິດຊອບຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ;

**5. ຜູ້ສັ່ງການ** ໝາຍເຖິງ ລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນ ຊຶ່ງເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນງົບປະມານ ໃນຂະແໜງການແລະ ທ້ອງຖິ່ນຂອງຕົນ ຕາມການມອບໝາຍຂອງຜູ້ສັ່ງການເອກ ;

**6. ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ** ໝາຍເຖິງ ຮ່ວງເງິນທີ່ກຳນົດໃນແຜນລາຍຈ່າຍງົບປະມານປະຈຳສົກປີ ແລະຄິດໄລ່ຈາກຍອດລາຍຈ່າຍງົບປະມານ ເພື່ອນຳໃຊ້ເຂົ້າໃນຄວາມຕ້ອງການບັງເອີນ ແລະ ຮີບດ່ວນເປັນຕົ້ນ: ວຽກງານປ້ອງກັນຊາດ- ປ້ອງກັນຄວາມສະຫງົບ, ໄພທຳມະຊາດ, ພະຍາດລະບາດ ;

**7. ຄັງສະສົມແຫ່ງລັດ** ໝາຍເຖິງ ຮ່ວງເງິນຂອງລັດຖະບານ ທີ່ກຳນົດໃນແຜນລາຍຈ່າຍປະຈຳສົກປີໃນແຜນງົບປະມານ ແລະຄິດໄລ່ຈາກຍອດລາຍຈ່າຍງົບປະມານ, ລາຍຮັບເກີນແຜນງົບປະມານປະຈຳສົກປີ ແລະຂາຍຊັບພະຍາກອນທຳມະຊາດ ໃນຂອບເຂດທີ່ລັດຖະບານຕົກລົງ, ທີ່ທ້ອນໄວ້ໃນແຕ່ລະສົກປີ ເພື່ອນຳໃຊ້ເຂົ້າໃນການແກ້ໄຂວຽກງານສຳຄັນ, ຮີບດ່ວນ ລະດັບຊາດ ເປັນຕົ້ນ: ວິກິດການທາງດ້ານການເງິນ ;

**8. ກອງທຶນຂອງລັດ** ໝາຍເຖິງ ຫົວໜ່ວຍການຈັດຕັ້ງໜຶ່ງ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກລັດຖະບານ, ມີໜ້າທີ່ເກັບລາຍຮັບເຂົ້າງົບປະມານແຫ່ງລັດ ແລະປະຕິບັດລາຍຈ່າຍ ຕາມລະບຽບການ ທີ່ລັດຖະບານອະນຸມັດ ;

**9. ອົງການບໍລິຫານວິຊາການ** ໝາຍເຖິງ ອົງການທີ່ນຳໃຊ້ຊັບສິນ ທີ່ລັດປະກອບໃຫ້ ເພື່ອບໍລິການຮັບໃຊ້ສັງຄົມ ຊຶ່ງລາຍຮັບ, ລາຍຈ່າຍທັງໝົດ ຕ້ອງຈົດເຂົ້າໃນແຜນງົບປະມານປະຈຳສົກປີ ;

**10. ວິໄນການເງິນ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດລະບຽບກົດໝາຍກ່ຽວກັບການເງິນ ຢ່າງເຂັ້ມງວດ ;

**11. ກຳນົດໝາຍ ກ່ຽວກັບການແບ່ງປັນງົບປະມານແຫ່ງລັດ** ໝາຍເຖິງ ຄາດໝາຍແນະນຳໃນການກຳນົດວົງເງິນ ທີ່ຈະແບ່ງໃຫ້ຂະແໜງການ ແລະທ້ອງຖິ່ນ ໂດຍອີງຕາມລັກສະນະ, ມາດຕະຖານວຽກ ແລະຈຸດພິເສດຂອງແຕ່ລະຂະແໜງການ ແລະທ້ອງຖິ່ນເຊັ່ນ: ທີ່ຕັ້ງພູມສາດ, ຈຳນວນພົນ, ເນື້ອທີ່ ແລະຄວາມຮຽກຮ້ອງຕ້ອງການໃນການພັດທະນາ ຊຶ່ງລັດຖະບານເປັນຜູ້ກຳນົດ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງ.

## ມາດຕາ 4. ນະໂຍບາຍກ່ຽວກັບງົບປະມານແຫ່ງລັດ

ລັດວາງນະໂຍບາຍກ່ຽວກັບງົບປະມານແຫ່ງລັດ ດ້ວຍການຂຸດຄົ້ນຄວາມອາດສາມາດບົ່ມຊ້ອນ ຢູ່ພາຍໃນປະເທດ, ຊອກ ແລະຄຸ້ມຄອງແຫຼ່ງລາຍຮັບພາຍໃນ, ຮັບປະກັນລາຍຈ່າຍ ແລະມີສ່ວນສະສົມແຮໄວ້, ພ້ອມກັນນັ້ນ ກໍປະຕິບັດການຮ່ວມມືກັບຕ່າງປະເທດຢ່າງເປັນເຈົ້າການ ເພື່ອຮັກສາສະຖຽນລະພາບທາງດ້ານການເງິນຂອງປະເທດ, ປະຕິບັດລາຍຈ່າຍເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢ່າງມີປະສິດທິຜົນ ເປັນຕົ້ນ: ການພັດທະນາຊັບພະຍາກອນມະນຸດ, ການບໍລິຫານຂອງກົງຈັກລັດ, ການກໍ່ສ້າງພື້ນຖານໂຄງລ່າງ ທີ່ມີຄວາມສຳຄັນ, ການຄົ້ນຄວ້າວິທະຍາສາດ, ການນຳໃຊ້ ແລະພັດທະນາເຕັກໂນໂລຢີ ເພື່ອສົ່ງເສີມການຜະລິດເປັນສິນຄ້າ, ການບໍລິການຕອບສະໜອງການຊົມໃຊ້ພາຍໃນ ແລະການສົ່ງອອກ, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະລົບລ້າງຄວາມທຸກຍາກ ແນໃສ່ເຮັດໃຫ້ປະເທດຊາດເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງເທື່ອລະກ້າວ, ສາມາດເຊື່ອມໂຍງກັບພາກພື້ນ ແລະສາກົນ.

## ມາດຕາ 5. ພັນທະຂອງບຸກຄົນ ແລະການຈັດຕັ້ງ ຕໍ່ງົບປະມານແຫ່ງລັດ

ບຸກຄົນ ແລະການຈັດຕັ້ງ ຕ້ອງປະຕິບັດພັນທະ ໃນການເສຍພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆມອບເຂົ້າງົບປະມານແຫ່ງລັດ ຕາມລະບຽບກົດໝາຍຢ່າງຖືກຕ້ອງ, ຄົບຖ້ວນ ແລະທັນກຳນົດເວລາ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

## ມາດຕາ 6. ຫຼັກການພື້ນຖານ ຂອງງົບປະມານແຫ່ງລັດ

ຫຼັກການພື້ນຖານ ຂອງງົບປະມານແຫ່ງລັດ ມີດັ່ງນີ້:

1. ທຸກແຫຼ່ງລາຍຮັບ-ລາຍຈ່າຍ ງົບປະມານທັງໝົດ ຕ້ອງໄດ້ລວມສູນຢ່າງຄົບຖ້ວນ ດ້ວຍການຈົດເຂົ້າໃນບັນຊີງົບປະມານແຫ່ງລັດ ໂດຍຜ່ານລະບົບຄັງເງິນແຫ່ງຊາດ ບົນພື້ນຖານຄວາມເປັນເອກະພາບ ທາງດ້ານລະບຽບກົດໝາຍອັນດຽວໃນຂອບເຂດທົ່ວປະເທດ, ບໍ່ອະນຸຍາດໃຫ້ເອົາລາຍຮັບຮັກສາໄວ້ຢູ່ນອກລະບົບງົບປະມານ ແລະສ້າງຄັງໂດຍບໍ່ໄດ້ຮັບອະນຸຍາດ;

2. ການສ້າງແຜນງົບປະມານຕ້ອງຮັບປະກັນຫຼັກການລວມສູນ, ປະຊາທິປະໄຕ,ເປີດເຜີຍ, ໂປ່ງໃສ ໂດຍເລີ່ມຈາກຄວາມອາດສາມາດຕົວຈິງຂອງເສດຖະກິດແຫ່ງຊາດ, ຮັບປະກັນການດຸນດ່ຽງເສດຖະກິດມະຫາພາກ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ;
3. ລາຍຈ່າຍງົບປະມານແຫ່ງລັດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມເປົ້າໝາຍ, ຈຳນວນ, ກຳນົດເວລາ ຕາມແຜນງົບປະມານປະຈຳສົກປີ ທີ່ສະພາແຫ່ງຊາດໄດ້ຮັບຮອງ. ບໍ່ອະນຸຍາດໃຫ້ຈ່າຍ ນອກແຜນ, ເກີນແຜນງົບປະມານ ແລະຕ້ອງຄຸ້ມຄອງລາຍຈ່າຍ ຕາມລະບຽບການເງິນທີ່ໄດ້ ກຳນົດໄວ້, ຮັບປະກັນຫຼັກການປະຢັດ ແລະ ມີປະສິດທິຜົນ ;
4. ການຂາດດຸນງົບປະມານແຫ່ງລັດ ແມ່ນໃຫ້ຂາດດຸນສະເພາະງົບປະມານສູນກາງ, ບໍ່ອະນຸຍາດໃຫ້ງົບປະມານທ້ອງຖິ່ນຂາດດຸນ. ສ່ວນຈຳນວນຜິດດ່ຽງ ລະຫວ່າງ ແຜນລາຍຮັບ ກັບແຜນລາຍຈ່າຍຂອງທ້ອງຖິ່ນ ແມ່ນງົບປະມານສູນກາງຈະຊ່ວຍໜູນໃຫ້ ;
5. ການດຸນດ່ຽງງົບປະມານແຫ່ງລັດ ຕ້ອງດຸນດ່ຽງ ລະຫວ່າງ ລວມຍອດລາຍຮັບກັບລວມຍອດລາຍຈ່າຍ. ໃນກໍລະນີທີ່ມີການຂາດດຸນງົບປະມານແຫ່ງລັດ ແມ່ນອະນຸຍາດໃຫ້ສະເພາະລາຍຈ່າຍລົງທຶນເພື່ອພັດທະນາເທົ່ານັ້ນ. ລະດັບການຂາດດຸນງົບປະມານ ແມ່ນສະພາແຫ່ງຊາດ ເປັນຜູ້ຕົກລົງບົນພື້ນຖານຄວາມຕ້ອງການ ແລະຄວາມສາມາດ ຂອງການເງິນແຫ່ງລັດ. ສ່ວນແຫຼ່ງເງິນເພື່ອມາດຸນດ່ຽງງົບປະມານແຫ່ງລັດນັ້ນ ໄດ້ມາຈາກເງິນກູ້ຢືມພາຍໃນ, ຕ່າງປະເທດ ແລະກູ້ຢືມຈາກຄັງສະສົມການເງິນແຫ່ງລັດ;
6. ຂໍ້ມູນຂ່າວສານງົບປະມານແຫ່ງລັດ ກ່ຽວກັບການສ້າງແຜນ, ການຈັດຕັ້ງປະຕິບັດ ແລະການສະຫຼຸບຕ້ອງຮັບປະກັນຄວາມຊັດເຈນ, ໂປ່ງໃສ, ເປີດເຜີຍ ແລະຕ້ອງໄດ້ຜ່ານການກວດກາ, ກວດການ, ກວດສອບ ແລະ ຢັ້ງຢືນ ຈາກອົງການທີ່ມີສິດໜ້າທີ່ ;
7. ການແບ່ງຄວາມຮັບຜິດຊອບກ່ຽວກັບລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະທ້ອງຖິ່ນ ຕ້ອງຮັບປະກັນຫຼັກການລວມສູນປະຊາທິປະໄຕ, ປະຕິບັດລະບຽບກົດໝາຍ ຢ່າງເປັນເອກະພາບ. ງົບປະມານສູນກາງຕ້ອງຮັກສາບົດບາດເປັນໃຈກາງ ໃນການກຳແຫຼ່ງລາຍຮັບເປັນສ່ວນໃຫຍ່ ເພື່ອປະຕິບັດລາຍຈ່າຍທີ່ມີຄວາມສຳຄັນລະດັບຊາດ ແລະຊ່ວຍໜູນໃຫ້ທ້ອງຖິ່ນ ເພື່ອຮັບປະກັນການພັດທະນາໃຫ້ມີຄວາມສະເໝີພາບ ແລະ ເທົ່າທຽມກັນ ;
8. ວຽກງານພາສີ, ສ່ວຍສາອາກອນ, ຄັງເງິນແຫ່ງຊາດ ລວມທັງພະນັກງານ, ວຽກງານວິຊາສະເພາະ ແລະງົບປະມານ ຕ້ອງຄຸ້ມຄອງລວມສູນຕາມສາຍຕັ້ງ ;
9. ການແບ່ງປັນງົບປະມານແຫ່ງລັດ ໃຫ້ຂະແໜງການ ແລະທ້ອງຖິ່ນຕ່າງໆ ຕ້ອງອີງຕາມກຳນົດໝາຍແບ່ງປັນງົບປະມານ ທີ່ສະພາແຫ່ງຊາດໄດ້ພິຈາລະນາຮັບຮອງ ຕາມການສະເໜີຂອງລັດຖະບານ.

**ມາດຕາ 7. ສົກປີງົບປະມານແຫ່ງລັດ**

ສົກປີງົບປະມານແຫ່ງລັດລວມມີ 12 ເດືອນ, ເລີ່ມແຕ່ວັນທີ 1 ຕຸລາ ແລະ ສິ້ນສຸດລົງ ໃນວັນທີ 30 ກັນຍາ ຂອງປີຖັດໄປ.

**ມາດຕາ 8. ກອງທຶນຂອງລັດ**

ລາຍຮັບ ແລະລາຍຈ່າຍຂອງກອງທຶນລັດ ຕ້ອງຈົດເຂົ້າໃນແຜນງົບປະມານແຫ່ງລັດປະຈຳສົກປີ, ຈັດຕັ້ງປະຕິບັດຢູ່ຄັງເງິນແຫ່ງຊາດ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍລາຍຈ່າຍ ຕາມລະບຽບການທີ່ລັດຖະບານ ອະນຸມັດ. ທຸກລາຍຮັບ ແລະລາຍຈ່າຍ ຂອງກອງທຶນລັດ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ ແລະກວດກາ ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຂອງຂະແໜງການການເງິນ.

ລາຍຮັບ ແລະລາຍຈ່າຍຂອງກອງທຶນລັດ ຕ້ອງໄດ້ມີການຄິດໄລ່, ໄລ່ລຽງລາຍຮັບ ແລະລາຍຈ່າຍ. ໃນກໍລະນີທີ່ລາຍຮັບຫາກບໍ່ພຽງພໍກັບລາຍຈ່າຍ ລັດຈະເປັນຜູ້ຊ່ວຍໜູນໃຫ້, ຖ້າຫາກລາຍຮັບຫຼາຍກວ່າລາຍຈ່າຍ ຕ້ອງໄດ້ມອບຄືນເຂົ້າງົບປະມານແຫ່ງລັດ.

**ມາດຕາ 9. ຫົວໜ່ວຍງົບປະມານຂອງອົງການບໍລິຫານວິຊາການ**

ຫົວໜ່ວຍງົບປະມານຂອງອົງການບໍລິຫານວິຊາການ ທີ່ຂຶ້ນກັບງົບປະມານສູນກາງ ແລະ ທ້ອງຖິ່ນ ຊຶ່ງມີລາຍຮັບເກັບຈາກການບໍລິການຂອງຂະແໜງວິຊາຊີບ ຕ້ອງຄິດໄລ່, ໄລ່ລຽງລາຍຮັບ, ລາຍຈ່າຍ, ສັງລວມເຂົ້າໃນແຜນງົບປະມານປະຈຳສົກປີ ຂອງອົງການກ່ຽວຂ້ອງ, ປະຕິບັດຕາມລະບຽບການເງິນແຫ່ງລັດ ແລະ ພາຍໃຕ້ການຄຸ້ມຄອງຂອງ ຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການການເງິນ.

ສຳລັບລາຍຮັບ ແລະລາຍຈ່າຍຂອງອົງການບໍລິຫານວິຊາການ ກໍໃຫ້ປະຕິບັດຕາມມາດຕາ 10 ວັກ 2 ຂອງກົດໝາຍສະບັບນີ້.

**ມາດຕາ 10. ການນຳໃຊ້ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ**

ເງິນແຮລັດຖະບານ ແມ່ນນາຍົກລັດຖະມົນຕີ ເປັນຜູ້ຕົກລົງຈ່າຍ. ເງິນແຮທ້ອງຖິ່ນ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ຕົກລົງຈ່າຍ. ໃນກໍລະນີທີ່ເງິນແຮດັ່ງກ່າວຫາກບໍ່ໄດ້ໃຊ້ຈ່າຍໃນສົກປີນັ້ນ ຕ້ອງມອບເຂົ້າຄັງສະສົມການເງິນແຫ່ງລັດ.

**ມາດຕາ 11. ການນຳໃຊ້ຄັງສະສົມແຫ່ງລັດ**

ຄັງສະສົມແຫ່ງລັດ ແມ່ນສະພາແຫ່ງຊາດເປັນຜູ້ຕົກລົງໃຫ້ຈ່າຍ ຕາມການສະເໜີຂອງລັດຖະບານ ໃນກໍລະນີທີ່ຈຳເປັນຮີບດ່ວນ ນາຍົກລັດຖະມົນຕີ ກໍມີສິດສັ່ງຈ່າຍ ແຕ່ຕ້ອງລາຍງານໃຫ້ສະພາແຫ່ງຊາດຊາບ.

**ມາດຕາ 12. ການພົວພັນຮ່ວມມືສາກົນ**

ລັດສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນຕ່າງໆ, ເຊື່ອມໂຍງກັບພາກພື້ນ ແລະສາກົນ ດ້ວຍການປະສານງານ, ແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາການ ແລະເຕັກໂນໂລຢີ ເພື່ອເຮັດໃຫ້ລະບົບການເງິນແຫ່ງຊາດ ມີຄວາມເຂັ້ມແຂງ ແລະທັນສະໄໝ, ຍາດ ແຍ່ງແຫຼ່ງທຶນ ແລະການເຂົ້າຮ່ວມຕະຫຼາດທຶນ.

## ພາກທີ II
## ໂຄງປະກອບຂອງງົບປະມານແຫ່ງລັດ

**ມາດຕາ 13. ໂຄງປະກອບຂອງງົບປະມານແຫ່ງລັດ**

ງົບປະມານແຫ່ງລັດ ປະກອບດ້ວຍ:

- ລາຍຮັບງົບປະມານແຫ່ງລັດ;
- ລາຍຈ່າຍງົບປະມານແຫ່ງລັດ;
- ການດຸ່ນດ່ຽງງົບປະມານແຫ່ງລັດ.

**ມາດຕາ 14. ການຈັດແບ່ງປະເພດລາຍຮັບ ແລະລາຍຈ່າຍງົບປະມານແຫ່ງລັດ**

ກະຊວງການເງິນ ເປັນຜູ້ຄົ້ນຄວ້າການຈັດແບ່ງປະເພດລາຍຮັບ ແລະລາຍຈ່າຍງົບປະມານແຫ່ງລັດ ເພື່ອສະເໜີລັດຖະບານພິຈາລະນາຕົກລົງ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງຕົວເລກລາຍຮັບ ແລະລາຍຈ່າຍແຕ່ລະສົກປີ ເພື່ອໃຫ້ນຳໃຊ້ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

## ໝວດທີ 1
## ລາຍຮັບງົບປະມານແຫ່ງລັດ

**ມາດຕາ 15. ລາຍຮັບງົບປະມານແຫ່ງລັດ**

ລາຍຮັບງົບປະມານແຫ່ງລັດ ລວມມີ ລາຍຮັບທີ່ເກັບຈາກພາຍໃນປະເທດ ແລະ ລາຍຮັບຈາກຕ່າງປະເທດ.

**ມາດຕາ 16. ແຫຼ່ງລາຍຮັບຈາກພາຍໃນປະເທດ**

ລາຍຮັບງົບປະມານແຫ່ງລັດພາຍໃນປະເທດ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້ :

1. ພາສີຂາອອກ-ຂາເຂົ້າ;
2. ສ່ວຍສາອາກອນ;

3. ຊັບສິນຂອງລັດ;
4. ກອງທຶນຂອງລັດ;
5. ອົງການບໍລິຫານວິຊາການ;
6. ດອກເບ້ຍໃຫ້ກູ້ຢືມ, ການທົດແທນຕົ້ນທຶນເງິນກູ້;
7. ການຂາຍຊັບສິນ ແລະ ຫຸ້ນຂອງລັດຖະບານ;
8. ການປັບໃໝ, ການຂາຍເຄື່ອງທີ່ຖືກຮິບ;
9. ການລະດົມທຶນ, ການປະກອບສ່ວນຂອງບຸກຄົນ ແລະ ການຈັດຕັ້ງ ;
10. ຄ່າທຳນຽມ ແລະອື່ນໆ.

**ມາດຕາ 17. ແຫຼ່ງລາຍຮັບຈາກຕ່າງປະເທດ**

ແຫຼ່ງລາຍຮັບງົບປະມານແຫ່ງລັດຈາກຕ່າງປະເທດ ແມ່ນລາຍຮັບທີ່ໄດ້ມາຈາກການຊ່ວຍເຫຼືອລ້າ ດ້ວຍຮູບການເປັນເງິນສົດ ຫຼື ວັດຖຸ ຈາກບັນດາລັດຖະບານ, ອົງການຈັດຕັ້ງສາກົນ, ບຸກຄົນ ແລະນິຕິບຸກຄົນ ຕ່າງປະເທດ ໃຫ້ລັດຖະບານ ແລະ ປະຊາຊົນລາວ.

## ໝວດທີ 2
## ລາຍຈ່າຍ ງົບປະມານແຫ່ງລັດ

**ມາດຕາ 18. ລາຍຈ່າຍງົບປະມານແຫ່ງລັດ**

ລາຍຈ່າຍງົບປະມານແຫ່ງລັດ ລວມມີລາຍຈ່າຍດັ່ງນີ້ :

1. ຮັບໃຊ້ວຽກງານບໍລິຫານປົກກະຕິ ;
2. ຊຳລະໜີ້ສິນ ;
3. ການລົງທຶນ ເພື່ອພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ;
4. ກອງທຶນ, ອົງການບໍລິຫານວິຊາການ ;
5. ເງິນແຮລັດຖະບານ ແລະເງິນແຮທ້ອງຖິ່ນ ;
6. ເຂົ້າຄັງສະສົມແຫ່ງລັດ ;
7. ລາຍຈ່າຍອື່ນໆ.

**ມາດຕາ 19. ລາຍຈ່າຍຮັບໃຊ້ວຽກງານບໍລິຫານປົກກະຕິ**

ລາຍຈ່າຍຮັບໃຊ້ວຽກງານບໍລິຫານປົກກະຕິ ແມ່ນລາຍຈ່າຍເພື່ອຮັບໃຊ້ກົງຈັກຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຊຶ່ງປະກອບມີ ລາຍຈ່າຍເງິນເດືອນ, ເງິນອຸດໜູນຕ່າງໆໃຫ້ລັດຖະກອນ, ເງິນບໍລິຫານປົກກະຕິ, ລາຍຈ່າຍຮັບໃຊ້ວິຊາການແຕ່ລະຂະແໜງການ.

**ມາດຕາ 20. ລາຍຈ່າຍຊຳລະໜີ້ສິນ**

ລາຍຈ່າຍຊຳລະໜີ້ສິນປະກອບມີ ການຊຳລະຕົ້ນທຶນ ແລະດອກເບ້ຍ ເງິນກູ້ຢືມ ທັງພາຍໃນ ແລະ ຕ່າງປະເທດ, ຊຳລະໜີ້ເງິນກູ້ຢືມ, ເງິນພັນທະປະກອບອົງການຈັດຕັ້ງສາກົນ.

**ມາດຕາ 21. ລາຍຈ່າຍການລົງທຶນ ເພື່ອພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ**

ລາຍຈ່າຍການລົງທຶນ ເພື່ອພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະກອບດ້ວຍ : ລາຍຈ່າຍລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ຊື້ຫຸ້ນນຳບໍລິສັດ ແລະວິສາຫະກິດ, ລາຍຈ່າຍຊື້ໃໝ່ ເຊັ່ນ : ອຸປະກອນ, ເຄື່ອງຈັກ ແລະ ພາຫະນະ.

**ມາດຕາ 22. ລາຍຈ່າຍອື່ນໆ**

ລາຍຈ່າຍກອງທຶນ, ອົງການບໍລິຫານວິຊາການ, ເງິນແຮລັດຖະບານ ແລະເງິນແຮທ້ອງຖິ່ນ, ລາຍຈ່າຍເຂົ້າຄັງສະສົມແຫ່ງລັດ ໄດ້ກຳນົດໄວ້ໃນມາດຕາ 8, 9, 10 ແລະ 11 ຂອງກົດໝາຍສະບັບນີ້.

ລາຍຈ່າຍອື່ນໆ ແມ່ນລາຍຈ່າຍທີ່ບໍ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້ ຊຶ່ງປະກອບມີ :

1. ລາຍຈ່າຍແກ້ໄຂຄວາມທຸກຈົນ;
2. ລາຍຈ່າຍຖົມຊຸມລາຄາ, ອັດຕາເງິນເຟີ້ ;
3. ລາຍຈ່າຍໃຫ້ກູ້ຢືມ ;
4. ລາຍຈ່າຍຊ່ວຍເຫຼືອລ້າ ;
5. ລາຍຈ່າຍບັງເອີນທີ່ອາດຈະເກີດຂຶ້ນ.

**ມາດຕາ 23. ລາຍຈ່າຍງົບປະມານແຫ່ງລັດຕາມຂະແໜງການ, ແຜນງານ ແລະໂຄງການ**

ນອກຈາກການຈັດແບ່ງລາຍຈ່າຍງົບປະມານແຫ່ງລັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້ແລ້ວ ລາຍຈ່າຍງົບປະມານແຫ່ງລັດ ຍັງຈັດແບ່ງຕາມຂະແໜງການ, ແຜນງານ ແລະໂຄງການດັ່ງນີ້ :

- ການຈັດແບ່ງຕາມຂະແໜງການ : ສຶກສາ, ສາທາລະນະສຸກ, ເສດຖະກິດ, ວັດທະນະທຳ-ສັງຄົມ, ວິທະຍາສາດ, ສິ່ງແວດລ້ອມ, ການປົກຄອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຫວັດດີການສັງຄົມ ແລະຂະແໜງການອື່ນໆ ;

- ການຈັດແບ່ງຕາມແຜນງານ ແລະໂຄງການ ແມ່ນແຜນງານ ແລະ ໂຄງການທີ່ໄດ້ຮັບຮອງເອົາໃນແຕ່ລະໄລຍະເຊັ່ນ: ແຜນງານຮັບປະກັນສະຖຽລະພາບ ແລະຄວາມສະຫງົບຮອບດ້ານ, ແຜນງານພັດທະນາກະສິກຳຮອບດ້ານ, ໂຄງການພັດທະນາຊົນນະບົດ ແລະລົບລ້າງຄວາມທຸກຍາກ, ໂຄງການຢຸດຕິການຖາງປ່າເຮັດໄຮ່ ແລະ ຈັດສັນອາຊີບຄົງທີ່.

## ໝວດທີ 3
## ການດຸນດ່ຽງງົບປະມານແຫ່ງລັດ

**ມາດຕາ 24. ລະບົບການດຸນດ່ຽງງົບປະມານຫ່ງລັດ**

ລະບົບການດຸນດ່ຽງງົບປະມານແຫ່ງລັດມີ ສາມກໍລະນີດັ່ງນີ້ :

- ງົບປະມານແຫ່ງລັດສົມດຸນ;
- ງົບປະມານແຫ່ງລັດເກີນດຸນ;
- ງົບປະມານແຫ່ງລັດຂາດດຸນ.

ການຂາດດຸນງົບປະມານແຫ່ງລັດປະຈຳສົກປີ ຕ້ອງສອດຄ່ອງກັບຄວາມຕ້ອງການ ແລະ ຄວາມອາດສາມາດຂອງການເງິນແຫ່ງຊາດ. ລະດັບການຂາດດຸນ ແມ່ນລັດຖະບານເປັນຜູ້ກຳນົດ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງເອົາ. ແຫຼ່ງເງິນເພື່ອດຸນດ່ຽງການຂາດດຸນງົບປະມານແຫ່ງລັດໄດ້ມາຈາກເງິນກູ້ຢືມຈາກພາຍໃນ ແລະ ຕ່າງປະເທດ.

**ມາດຕາ 25. ການດຸນດ່ຽງງົບປະມານແຫ່ງລັດ**

ການດຸນດ່ຽງງົບປະມານແຫ່ງລັດ ແມ່ນການເຮັດໃຫ້ງົບປະມານມີຄວາມສົມດຸນລະຫວ່າງ ລາຍຮັບກັບລາຍຈ່າຍ ຊຶ່ງຕ້ອງປະຕິບັດດັ່ງນີ້:

- ໃນກໍລະນີທີ່ງົບປະມານເກີນດຸນ ຕ້ອງໂອນສ່ວນເກີນດຸນເຂົ້າຄັງສະສົມການເງິນແຫ່ງລັດ ຫຼື ເພີ່ມເຕີມລາຍຈ່າຍເຂົ້າໃນວຽກງານທີ່ຈຳເປັນ ;
- ໃນກໍລະນທີ່ງົບປະມານຂາດດຸນ ຕ້ອງຊອກຫາແຫຼ່ງເງິນກູ້ຢືມ ຫຼື ຫຼຸດຜ່ອນລາຍຈ່າຍ ເພື່ອຮັກສາການດຸນດ່ຽງງົບປະມານແຫ່ງລັດ.

**ມາດຕາ 26. ການເກີນດຸນ, ການຂາດດຸນ ແລະແຫຼ່ງເງິນດຸນດ່ຽງງົບປະມານແຫ່ງລັດ**

ການເກີນດຸນລາຍຮັບທີ່ເປັນພູດຂອງສູນກາງ ແມ່ນລັດຖະບານເປັນຜູ້ກຳນົດ ເພື່ອເພີ່ມໃຫ້ລາຍຈ່າຍໃດໜຶ່ງ ຫຼື ມອບເຂົ້າຄັງສະສົມແຫ່ງລັດ;

ງົບປະມານແຫ່ງລັດ ແມ່ນໃຫ້ຂາດດຸນສະເພາະງົບປະມານສູນກາງ ເພື່ອນຳໃຊ້ສະເພາະເຂົ້າໃນການລົງທຶນເທົ່ານັ້ນ. ແຫຼ່ງເງິນດຸນດ່ຽງງົບປະມານແຫ່ງລັດ ແມ່ນເງິນໄດ້ມາຈາກເງິນກູ້ຢືມ ພາຍໃນ ແລະ ຕ່າງປະເທດ:

1. ເງິນກູ້ພາຍໃນ ໄດ້ມາຈາກການລະດົມທຶນພາຍໃນ ດ້ວຍຮູບການ ຂາຍພັນທະບັດ, ຮຸ້ນກູ້ ແລະຮູບການອື່ນໆ ;
2. ເງິນກູ້ຈາກຕ່າງປະເທດ ໄດ້ມາຈາກຮູບການກູ້ຢືມຈາກ ຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງຮ່ວມມື ສອງຝ່າຍ, ຫຼາຍຝ່າຍ ແລະຮູບການອື່ນໆ.

## ພາກທີ III
## ຄວາມຮັບຜິດຊອບກ່ຽວກັບງົບປະມານແຫ່ງລັດ

### ໝວດທີ 1
### ຄວາມຮັບຜິດຊອບຂອງບັນດາອົງການທີ່ມີການພົວພັນກັບງົບປະມານແຫ່ງລັດ

**ມາດຕາ 27. ຄວາມຮັບຜິດຊອບຂອງສະພາແຫ່ງຊາດ**

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ສະພາແຫ່ງຊາດມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້ :

1. ເຂົ້າຮ່ວມຄົ້ນຄວ້າສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ເປັນຕົ້ນ ການແບ່ງປັນງົບປະມານແຫ່ງລັດໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ ອ້ອມຂ້າງສູນກາງ ແລະບັນດາແຂວງ, ນະຄອນ;
2. ພິຈາລະນາຮັບຮອງເອົາການສ້າງ ແລະປັບປຸງກົດໝາຍ ໃນຂົງເຂດການເງິນ ແລະງົບປະມານແຫ່ງລັດ;
3. ພິຈາລະນາຮັບຮອງເອົາການກຳນົດນະໂຍບາຍການເງິນ, ເງິນຕາຂອງຊາດ, ລາຍຮັບ-ລາຍຈ່າຍ, ການຂາດດຸນ, ໜີ້ສິນ ແລະການດຸນດ່ຽງງົບປະມານແຫ່ງລັດ ເພື່ອຮັບປະກັນສະເຖຍລະພາບທາງດ້ານເສດຖະກິດ-ການເງິນ;
4. ພິຈາລະນາຮັບຮອງເອົາແຜນຍຸດທະສາດການເງິນ ໄລຍະກາງ, ໄລຍະຍາວ ແລະ ແຜນງົບປະມານແຫ່ງລັດປະຈຳສົກປີ;
5. ພິຈາລະນາຮັບຮອງເອົາການສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳສົກປີ;
6. ພິຈາລະນາຮັບຮອງເອົາບັນດາແຜນງານ ແລະໂຄງການກໍ່ສ້າງພື້ນຖານລະດັບຊາດ;
7. ພິຈາລະນາຮັບຮອງເອົາແຜນດັດແກ້ ງົບປະມານແຫ່ງລັດປະຈຳສົກປີ ໃນກໍລະນີທີ່ມີຄວາມຈຳເປັນ;
8. ຕິດຕາມກວດກາ ການຈັດຕັ້ງປະຕິບັດບັນດານິຕິກຳກ່ຽວກັບວຽກງານການເງິນ ແລະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີໃນຂອບເຂດທົ່ວປະເທດ.

**ມາດຕາ 28. ຄວາມຮັບຜິດຊອບຂອງລັດຖະບານ**

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ລັດຖະບານມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້ :

1. ສະເໜີຕໍ່ສະພາແຫ່ງຊາດ ກ່ຽວກັບຮ່າງແຜນຍຸດທະສາດ, ນະໂຍບາຍ ໄລຍະກາງ, ໄລຍະຍາວ, ກົດໝາຍ ແລະນິຕິກຳອື່ນໆ ກ່ຽວກັບວຽກງານການເງິນ ແລະງົບປະມານແຫ່ງລັດ;
2. ສະເໜີຕໍ່ສະພາແຫ່ງຊາດ ກ່ຽວກັບຮ່າງແຜນງົບປະມານແຫ່ງລັດປະຈຳສົກປີ ລວມທັງແຜນງານ ແລະ ໂຄງການລົງທຶນ;

3. ສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງແຜນງົບປະມານແຫ່ງລັດປະຈຳສົກປີ ໃຫ້ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ແລະ ທ້ອງຖິ່ນ;
4. ອອກດຳລັດກ່ຽວກັບແຜນງົບປະມານແຫ່ງລັດປະຈຳສົກປີ, ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກວດການ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ;
5. ຊີ້ນຳກະຊວງການເງິນ, ບັນດາອົງການຂອງລັດຂັ້ນສູນກາງ ແລະທ້ອງຖິ່ນ ປະຕິບັດລາຍຮັບ ແລະລາຍຈ່າຍງົບປະມານແຫ່ງລັດ ໃຫ້ຖືກຕ້ອງຕາມແຜນງົບປະມານ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະສັ່ງໂຈະລາຍຈ່າຍ ເມື່ອມີການລະເມີດລະບຽບກົດໝາຍກ່ຽວກັບການເງິນ ;
6. ຕົກລົງມອບສິດໃຫ້ກະຊວງການເງິນ ອອກລະບຽບການ ແລະມາດຕະການຄຸ້ມຄອງເກັບລາຍຮັບ, ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ;
7. ສະເໜີໃຫ້ສະພາແຫ່ງຊາດດັດແກ້ແຜນງົບປະມານປະຈຳສົກປີ ໃນກໍລະນີທີ່ມີຄວາມຈຳເປັນ, ດັດແກ້, ເພີ່ມ ຫຼື ຫຼຸດລາຍຈ່າຍ ຕາມຕົວເລກລາຍຮັບ ເພື່ອຮັບປະກັນການດຸນດ່ຽງງົບປະມານແຫ່ງລັດ;
8. ລາຍງານສະພາບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ບັນດາໂຄງການລົງທຶນພື້ນຖານໂຄງລ່າງ ຕໍ່ສະພາແຫ່ງຊາດ;

**ມາດຕາ 29. ຄວາມຮັບຜິດຊອບຂອງຄະນະກຳມະການແຜນການ ແລະການລົງທຶນ**

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ຄະນະກຳມະການແຜນການ ແລະການລົງທຶນມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

1. ປະສານສົມທົບກັບກະຊວງການເງິນ ໃນການສ້າງແຜນຍຸດທະສາດການເງິນໄລຍະກາງ, ໄລຍະຍາວ ແລະແຜນງົບປະມານປະຈຳສົກປີ;
2. ປະສານສົມທົບກັບກະຊວງການເງິນ ໃນການກຳນົດເພດານຂອງແຜນການລົງທຶນຂອງລັດ ທີ່ນຳໃຊ້ແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ປະຈຳສົກປີ;
3. ຄົ້ນຄວ້າ ແລະນຳສະເໜີລັດຖະບານ ກ່ຽວກັບໂຄງການລົງທຶນ ທີ່ເປັນບູລິມະສິດຂອງລັດຖະບານ;
4. ເປັນເຈົ້າການ ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດການລົງທຶນຂອງລັດ ໂດຍປະສານສົມທົບກັບບັນດາອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ເພື່ອນຳສະເໜີລັດຖະບານພິຈາລະນາ ແລະ ແກ້ໄຂ ຕາມແຕ່ລະກໍລະນີ;
5. ເປັນເຈົ້າການຮ່າງສັນຍາກ່ຽວກັບການອະນຸຍາດການລົງທຶນພາຍໃນ ແລະຕ່າງປະເທດ ໂດຍປະສານສົມທົບກັບກະຊວງການເງິນ, ຂະແໜງການອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະທ້ອງຖິ່ນ.

**ມາດຕາ 30.    ຄວາມຮັບຜິດຊອບຂອງທະນາຄານແຫ່ງ ສປປ ລາວ**

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ທະນາຄານແຫ່ງ ສປປ ລາວ ມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້ :

1. ບໍລິການບັນຊີເງິນຝາກງົບປະມານແຫ່ງລັດ, ຮັກສາວັດຖຸມີຄ່າ ທີ່ຂະແໜງການເງິນຝາກໄວ້;
2. ພິຈາລະນາສະໜອງທຶນກູ້ຢືມໄລຍະສັ້ນໃຫ້ກະຊວງການເງິນ ເມື່ອມີຄວາມຈຳເປັນ ຕາມການສະເໜີ ຊຶ່ງຕ້ອງໄດ້ທົດແທນຄືນໃນສົກປີງົບປະມານນັ້ນ;
3. ໃຫ້ຄວາມຮ່ວມມືໃນການບໍລິການຮັບ-ຈ່າຍ, ເປີດຈົດໝາຍສິນເຊື່ອ ເພື່ອຈັດຊື້ສິນຄ້າ ແລະການບໍລິການ ແລະດຳເນີນການຊຳລະໜີ້ສິນກັບຕ່າງປະເທດ ຕາມການສັ່ງມອບ-ສັ່ງຈ່າຍຂອງກະຊວງການເງິນ;
4. ຂາຍພັນທະບັດຂອງລັດ ຕາມການຕົກລົງຂອງລັດຖະບານ ;
5. ຄຸ້ມຄອງອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບທີ່ເສດຖະກິດມະຫາພາກສາມາດຮອງຮັບໄດ້.

## ໝວດທີ 2
## ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງກັບງົບປະມານແຫ່ງລັດ

**ມາດຕາ 31.    ຄວາມຮັບຜິດຊອບຂອງກະຊວງ ແລະ ອົງການຈັດຕັ້ງອື່ນ**

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ກະຊວງ ແລະອົງການຈັດຕັ້ງອື່ນ ມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

1. ຊີ້ນຳພາກສ່ວນການເງິນທີ່ຂຶ້ນກັບຕົນ ກ່ຽວກັບການສ້າງແຜນ, ຈັດຕັ້ງປະຕິບັດ ແລະ ສະຫຼຸບງົບປະມານ, ສ້າງແຜນລາຍຮັບ, ຈັດສັນແຜນລາຍຈ່າຍ ຮັບປະກັນການເຄື່ອນໄຫວຂອງກິງຈັກໃຫ້ມີປະສິດທິຜົນ, ປະຢັດ ແລະຖືກຕ້ອງຕາມລະບຽບກົດໝາຍ ແລະຕາມແຜນງົບປະມານທີ່ສະພາແຫ່ງຊາດໄດ້ພິຈາລະນາຮັບຮອງເອົາ;
2. ຄຸ້ມຄອງ, ຊີ້ນຳ ແລະກວດກາ ວິສາຫະກິດຂອງລັດ ແລະເອກະຊົນ, ຫົວໜ່ວຍບໍລິຫານວິຊາການ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ປະຕິບັດພັນທະເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ, ທັນກຳນົດເວລາ ແລະການໃຊ້ຈ່າຍໃຫ້ຖືກຕ້ອງຕາມແຜນງົບປະມານ ແລະລະບຽບກົດໝາຍ;
3. ຄຸ້ມຄອງ, ຊີ້ນຳ ແລະກວດກາການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ກ່ຽວກັບການເກັບລາຍຮັບ ທີ່ຂຶ້ນກັບຕົນຮັບຜິດຊອບ ໃຫ້ໄດ້ຕາມແຜນການ ແລະລື່ນແຜນການ; ກ່ຽວກັບການຈັດຕັ້ງປະຕິບັດລາຍຈ່າຍ ໃຫ້ໄປຕາມແຜນການປີທີ່ລັດຖະບານມອບໃຫ້ ໂດຍມີການໄລ່ລຽງປະສິດທິຜົນ, ມີການປະຢັດ ແລະຕາມລະບຽບກົດໝາຍ ;

4. ປະສານສົມທົບ ກັບຄະນະກຳມະການແຜນການ ແລະ ການລົງທຶນ ແລະກະຊວງການເງິນ ຄົ້ນຄວ້າສັນຍາກ່ຽວກັບການອະນຸຍາດການລົງທຶນຂອງນັກລົງທຶນພາຍໃນ ແລະຕ່າງປະເທດ ເພື່ອຮັບປະກັນ ໃຫ້ລັດໄດ້ຮັບຜົນປະໂຫຍດຢ່າງເໝາະສົມ.

**ມາດຕາ 32. ຄວາມຮັບຜິດຊອບຂອງ ເຈົ້າແຂວງ, ເຈົ້າຄອງນະຄອນ**

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ເຈົ້າແຂວງ, ເຈົ້າຄອງນະຄອນ ມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

1. ຊີ້ນຳ ບັນດາພະແນກການຂັ້ນແຂວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃນການສ້າງແຜນ, ຈັດແບ່ງງົບປະມານ, ການຈັດຕັ້ງປະຕິບັດ ແລະການສະຫຼຸບແຜນງົບປະມານແຫ່ງລັດ ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ;
2. ຊີ້ນຳຂະແໜງການການເງິນທ້ອງຖິ່ນ ເກັບກຳຖານຂໍ້ມູນແຫຼ່ງລາຍຮັບງົບປະມານ ໃຫ້ຄົບຖ້ວນ ແລະຊັດເຈນ ເພື່ອລາຍງານໃຫ້ຂະແໜງເກັບລາຍຮັບທີ່ເປັນສາຍຕັ້ງ ແລະກະຊວງການເງິນ;
3. ຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະກວດການ ການເກັບລາຍຮັບງົບປະມານ ຕາມຂອບເຂດສິດ ແລະຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນຫຼັກການເກັບລາຍຮັບໃຫ້ຄົບຖ້ວນ, ຖືກຕ້ອງ, ເອກະພາບ, ຍຸຕິທຳ, ເປີດເຜີຍ ຕາມລະບຽບກົດໝາຍ; ບໍ່ອະນຸຍາດໃຫ້ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ-ສ່ວຍສາອາກອນ;
4. ຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະກວດການ ການປະຕິບັດລາຍຈ່າຍງົບປະມານ ໃຫ້ມີປະສິດທິຜົນ, ປະຢັດ, ຖືກຕ້ອງຕາມແຜນງົບປະມານປະຈຳສົກປີ ແລະລະບຽບກົດໝາຍ; ບໍ່ອະນຸຍາດໃຫ້ອອກຂໍ້ຕົກລົງຈ່າຍ ແລະ ສ້າງໜີ້ນອກແຜນງົບປະມານ ;
5. ປະສານສົມທົບກັບກະຊວງການເງິນໃນການຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະກວດການ ການເກັບລາຍຮັບ ແລະການປະຕິບັດລາຍຈ່າຍ ທີ່ກ່າວມາເທິງນີ້ ;
6. ສ້າງເງື່ອນໄຂໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເຂົ້າຮ່ວມການສ້າງແຜນງົບປະມານ, ການກວດກາຄວາມຖືກຕ້ອງກ່ຽວກັບການສ້າງແຜນ, ການເຮັດບົດສະຫຼຸບສັງລວມ, ບົດສະຫຼຸບຕົວເລກຂາດຕົວງົບປະມານ, ຊຸກຍູ້ການຕິດຕາມກວດກາ ສະພາບການຈັດຕັ້ງປະຕິບັດງົບປະມານ ຂອງບັນດາພະແນກການຂັ້ນແຂວງ ແລະຂັ້ນເມືອງ;
7. ຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະກວດການ ການປະຕິບັດໜ້າທີ່ຂອງພະນັກງານການເງິນ ທີ່ຂຶ້ນກັບພະແນກການເງິນແຂວງ, ນະຄອນ, ມີສິດສະເໜີກະຊວງການເງິນແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານການເງິນ ທີ່ສັງກັດພະແນກການເງິນແຂວງ, ນະຄອນ ຕາມຕຳແໜ່ງງານ ຊຶ່ງກະຊວງການເງິນຄຸ້ມຄອງ;
8. ອຳນວຍຄວາມສະດວກ, ຊຸກຍູ້ ແລະກວດກາ ການປະຕິບັດໜ້າທີ່ຂອງພະນັກງານພາສີ, ສ່ວຍສາອາກອນ ແລະຄັງເງິນແຫ່ງຊາດຢູ່ທ້ອງຖິ່ນ ໂດຍປະສານສົມທົບກັບກະຊວງການເງິນ ຕາມລະບຽບກົດໝາຍ;

9. ໃນກໍລະນີ ລາຍຮັບທີ່ເປັນພູດຂອງທ້ອງຖິ່ນເກັບບໍ່ໄດ້ຕາມແຜນການປະຈຳສົກປີ ຕ້ອງໄດ້ຫຼຸດຜ່ອນລາຍຈ່າຍ ຕາມຈຳນວນລາຍຮັບທີ່ເກັບບໍ່ໄດ້ ເພື່ອຮັກສາລະດັບການດຸນດ່ຽງປະຈຳສົກປີ; ຖ້າຫາກລາຍຮັບທີ່ເປັນພູດຂອງທ້ອງຖິ່ນ ເກັບໄດ້ລື່ນແຜນການປະຈຳສົກປີ ແມ່ນໃຫ້ທ້ອງຖິ່ນນຳໃຊ້ ເພື່ອພັດທະນາທ້ອງຖິ່ນຂອງຕົນ.

**ມາດຕາ 33. ຄວາມຮັບຜິດຊອບຂອງຜູ້ປະຕິບັດພັນທະເຂົ້າງົບປະມານ**

ໃນການຈັດຕັ້ງປະຕິບັດພັນທະເຂົ້າງົບປະມານແຫ່ງລັດ ອົງການຈັດຕັ້ງ, ບຸກຄົນ ແລະນິຕິບຸກຄົນມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້ :

1. ຕ້ອງມອບເງິນພາສີ, ສ່ວຍສາອາກອນ, ຄ່າທຳນຽມ ແລະຄ່າບໍລິການຕ່າງໆ ເຂົ້າງົບປະມານໃຫ້ຄົບຖ້ວນ, ທັນກຳນົດເວລາ ແລະ ຖືກຕ້ອງຕາມລະບຽບກົດໝາຍ;
2. ຖືບັນຊີຕາມລະບຽບ ແລະປະຕິບັດໃຫ້ຖືກຕ້ອງ ຕາມລະບອບການບັນຊີຂອງລັດວາງອອກ ຢ່າງໂປ່ງໃສ, ເປີດເຜີຍ ແລະຢູ່ພາຍໃຕ້ການກວດກາຂອງຂະແໜງການການເງິນ ແລະອົງການກວດກາພາຍນອກ ໃນແຕ່ລະໄລຍະ;
3. ມີສິດສະເໜີ, ຮ້ອງຟ້ອງ ແລະຮ້ອງຂໍຄວາມເປັນທຳ ໃນກໍລະນີທີ່ເຫັນວ່າບໍ່ໄດ້ຮັບຄວາມຍຸຕິທຳຈາກການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຂະແໜງການການເງິນ, ພາສີ, ສ່ວຍສາອາກອນ ແລະຄັງເງິນແຫ່ງຊາດ;

ການບໍ່ປະຕິບັດພັນທະຂອງຕົນ ຕໍ່ງົບປະມານເຊັ່ນ : ການເຊື່ອງອຳ, ການປົກປິດລາຍຮັບ, ການລັກລອບໜີພາສີ, ການຄ້າຂາຍເຖື່ອນ, ການສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ຂອງລັດກ່ຽວກັບການມອບພັນທະເຂົ້າງົບປະມານ ຖືວ່າເປັນຄວາມຜິດ ແລະຈະຖືກດຳເນີນຄະດີຕາມກົດໝາຍ.

## ພາກທີ IV
## ການແບ່ງຄວາມຮັບຜິດຊອບ ກ່ຽວກັບ ລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ

### ໝວດທີ 1
### ການແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະທ້ອງຖິ່ນ

**ມາດຕາ 34. ລະບົບງົບປະມານແຫ່ງລັດ**

ລະບົບງົບປະມານແຫ່ງລັດ ປະກອບດ້ວຍ : ງົບປະມານສູນກາງ ແລະ ງົບປະມານທ້ອງຖິ່ນ.

- ງົບປະມານສູນກາງ ລວມມີ ລາຍຮັບ-ລາຍຈ່າຍ ງົບປະມານ ຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;
- ງົບປະມານທ້ອງຖິ່ນ ລວມມີ ລາຍຮັບ-ລາຍຈ່າຍ ງົບປະມານ ຂອງອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນທ້ອງຖິ່ນ.

ລັດຖະບານເປັນຜູ້ກຳນົດລະອຽດກ່ຽວກັບລາຍຮັບ-ລາຍຈ່າຍງົບປະມານ ຂອງອົງການປົກຄອງທ້ອງຖິ່ນ ຕາມລະບຽບກົດໝາຍ.

**ມາດຕາ 35. ການແບ່ງຄວາມຮັບຜິດຊອບກ່ຽວກັບງົບປະມານແຫ່ງລັດ**

ການແບ່ງຄວາມຮັບຜິດຊອບກ່ຽວກັບງົບປະມານແຫ່ງລັດ ແມ່ນການແບ່ງສິດໃນການຄຸ້ມຄອງ, ຊີ້ນຳ ແລະຕົກລົງກ່ຽວກັບວຽກງານການເງິນ, ລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະທ້ອງຖິ່ນ.

ການແບ່ງປັນລາຍຮັບ-ລາຍຈ່າຍ ລະຫວ່າງງົບປະມານສູນກາງ ແລະທ້ອງຖິ່ນ ແມ່ນປະຕິບັດບົນພື້ນຖານການກຳນົດຄວາມຮັບຜິດຊອບດ້ານລາຍຈ່າຍ ເພື່ອກຳນົດແຫຼ່ງລາຍຮັບ.

## ໝວດທີ 2
## ການແບ່ງແຫຼ່ງລາຍຮັບງົບປະມານ ສູນກາງ ແລະ ທອ້ງຖິ່ນ

**ມາດຕາ 36. ການແບ່ງແຫຼ່ງລາຍຮັບງົບປະມານແຫ່ງລັດ**

ແຫຼ່ງລາຍຮັບງົບປະມານແຫ່ງລັດ ແບ່ງອອກເປັນ ສາມ ພູດ ດັ່ງນີ້ :

- ແຫຼ່ງລາຍຮັບທີ່ເປັນພູດຂອງສູນກາງຮ້ອຍສ່ວນຮ້ອຍ ( 100%) ;
- ແຫຼ່ງລາຍຮັບທີ່ເປັນພູດຂອງທ້ອງຖິ່ນ ຮ້ອຍສ່ວນຮ້ອຍ (100%) ;
- ແຫຼ່ງລາຍຮັບພູດແບ່ງປັນ ລະຫວ່າງ ງົບປະມານສູນກາງ ແລະ ງົບປະມານທ້ອງຖິ່ນ.

**ມາດຕາ 37. ແຫຼ່ງລາຍຮັບງົບປະມານທີ່ເປັນພູດຂອງສູນກາງ**

ລາຍຮັບງົບປະມານທີ່ເປັນພູດຂອງສູນກາງ ຮ້ອຍສ່ວນຮ້ອຍ (100%) ຈາກແຫຼ່ງທີ່ຕົນຄຸ້ມຄອງມີ ດັ່ງນີ້ :

1. ພາສີຂາອອກ-ຂາເຂົ້າ ;
2. ອາກອນຕົວເລກທຸລະກິດ ຫຼື ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນກຳໄລຈາກສິນຄ້ານຳເຂົ້າ;
3. ຄ່າທຳນຽມ ແລະຄ່າບໍລິການຕ່າງໆໃນຂອດຂາອອກ-ຂາເຂົ້າເຊັ່ນ: ຄ່າຜ່ານດ່ານ, ຄ່າອອກໜັງສື ແລະ ບັດຜ່ານແດນ;
4. ລາຍຮັບຈາກຊັບພະຍາກອນທຳມະຊາດ ເຊັ່ນ : ການຂາຍໄມ້, ແຮ່ທາດ, ລາຍຮັບຈາກການເຊົ່າເຮືອນ ແລະຊັບສິນອື່ນໆຂອງລັດ;
5. ການຂາຍຊັບສິນ ແລະ ຮຸ້ນຂອງລັດຖະບານ;
6. ລາຍຮັບຈາກການບິນຜ່ານນ່ານຟ້າ, ຄ່າພາກຫຼວງ;
7. ລາຍຮັບຈາກບັນດາກອງທຶນ ຂອງລັດ;

8. ລາຍຮັບຈາກບັນດາອົງການບໍລິຫານວິຊາການ;
9. ລາຍຮັບຈາກດອກເບ້ຍເງິນໃຫ້ກູ້ຢືມ ແລະເງິນທົດແທນຕົ້ນທຶນຂອງລັດຖະບານ;
10. ລາຍຮັບຈາກການປັບໃໝ ແລະຂາຍເຄື່ອງທີ່ຖືກຮິບ;
11. ລາຍຮັບຈາກການຊ່ວຍເຫຼືອລ້າຂອງຕ່າງປະເທດ;
12. ລາຍຮັບຈາກການລະດົມທຶນ ແລະ ປະກອບສ່ວນຂອງບຸກຄົນ ແລະ ການຈັດຕັ້ງ;
13. ລາຍຮັບອື່ນໆ ຕາມລະບຽບກົດໝາຍ.

**ມາດຕາ 38. ແຫຼ່ງລາຍຮັບງົບປະມານທີ່ເປັນພູດຂອງທ້ອງຖິ່ນ**

ລາຍຮັບງົບປະມານທີ່ເປັນພູດຂອງທ້ອງຖິ່ນ ຮ້ອຍສ່ວນຮ້ອຍ (100%) ຈາກແຫຼ່ງທີ່ຕົນຄຸ້ມຄອງ ມີດັ່ງນີ້ :

1. ຄ່າທຳນຽມນຳໃຊ້ທີ່ດິນ (ພາສີທີ່ດິນ), ຄ່າເຊົ່າທີ່ດິນ; ຄ່າມອບສິດນຳໃຊ້ ແລະໂອນສິດນຳໃຊ້ທີ່ດິນ, ຄ່າທຳນຽມອອກທະບຽນອາກອນ, ອາກອນລາຍໄດ້ຈາກບຸກຄົນ ;
2. ລາຍຮັບຈາກຊັບພະຍາກອນທຳມະຊາດເຊັ່ນ :ການຂາຍຫີນ, ຊາຍ, ດິນດຳ, ດິນແດງ, ຄ່າເຊົ່າຊັບສິນຂອງລັດເຊັ່ນ: ເຮືອນ, ທີ່ດິນ ແລະຊັບສິນອື່ນໆ;
3. ລາຍຮັບຈາກບັນດາກອງທຶນ ຂອງລັດ;
4. ລາຍຮັບຈາກບັນດາຫົວໜ່ວຍບໍລິຫານ ວິຊາການ ;
5. ລາຍຮັບຈາກຄ່າທຳນຽມຕ່າງໆ ແລະ ຄ່າບໍລິການຂອງລັດ ;
6. ລາຍຮັບຈາກການປັບໃໝ ແລະ ຂາຍເຄື່ອງທີ່ຖືກຮິບ ;
7. ລາຍຮັບຈາກການປະກອບສ່ວນຂອງບຸກຄົນ ແລະການຈັດຕັ້ງ ;
8. ເງິນຊ່ວຍເຫຼືອລ້າຈາກຕ່າງປະເທດ;
9. ລາຍຮັບອື່ນໆ ຕາມລະບຽບກົດໝາຍ.

**ມາດຕາ 39. ແຫຼ່ງລາຍຮັບພູດແບ່ງປັນ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ**

ແຫຼ່ງລາຍຮັບພູດແບ່ງປັນ ລະຫວ່າງງົບປະມານ ສູນກາງ ແລະ ງົບປະມານທ້ອງຖິ່ນ ລວມມີ :

1. ອາກອນຕົວເລກທຸລະກິດຫຼືອາກອນມູນຄ່າເພີ່ມ ຈາກການຜະລິດສິນຄ້າພາຍໃນປະເທດ ;
2. ອາກອນຊົມໃຊ້ ທີ່ເກັບຈາກການຜະລິດສິນຄ້າພາຍໃນປະເທດ ;
3. ອາກອນກຳໄລ, ອາກອນຕ່ຳສຸດ ທີ່ເກັບຈາກການຜະລິດສິນຄ້າພາຍໃນປະເທດ ;
4. ລາຍຮັບເງິນປັນຜົນກຳໄລສຸດທິ.

ການກຳນົດອັດຕາສ່ວນການແບ່ງປັນປະເພດລາຍຮັບ ຢູ່ໃນພູດແບ່ງປັນ ແມ່ນລັດຖະບານເປັນຜູ້ຕົກລົງ. ໃນກໍລະນີທີ່ທ້ອງຖິ່ນໃດ ຫາກມີລາຍຮັບພູດຂອງທ້ອງຖິ່ນຫຼາຍກວ່າແຜນລາຍຈ່າຍປະຈຳສົກປີ ທີ່ສະພາແຫ່ງຊາດຮັບຮອງ ລັດຖະບານສາມາດ ກຳນົດລາຍຮັບສະເພາະໃຫ້ທ້ອງຖິ່ນນັ້ນ.

## ໝວດທີ 3
## ການແບ່ງລາຍຈ່າຍງົບປະມານລະຫວ່າງ ສູນກາງ ແລະ ທ້ອງຖິ່ນ

**ມາດຕາ 40. ລາຍຈ່າຍງົບປະມານແຫ່ງລັດ**

ລາຍຈ່າຍງົບປະມານແຫ່ງລັດ ປະກອບດ້ວຍ :

- ລາຍຈ່າຍງົບປະມານສູນກາງ ;
- ລາຍຈ່າຍງົບປະມານທ້ອງຖິ່ນ.

**ມາດຕາ 41. ລາຍຈ່າຍງົບປະມານສູນກາງ**

ລາຍຈ່າຍງົບປະມານສູນກາງ ປະກອບມີ :

1. ລາຍຈ່າຍຮັບໃຊ້ວຽກງານບໍລິຫານກົງຈັກຂອງອົງການຈັດຕັ້ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;
2. ລາຍຈ່າຍໃຫ້ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ສູນກາງຄຸ້ມຄອງ ແລະກຳລັງຫຼວງ;
3. ລາຍຈ່າຍຊຳລະໜີ້ດອກເບ້ຍເງິນກູ້ພາຍໃນປະເທດ ແລະ ຕ່າງປະເທດ ຂອງລັດຖະບານ, ເງິນປະກອບສ່ວນພັນທະໃຫ້ອົງການຈັດຕັ້ງສາກົນ;
4. ລາຍຈ່າຍກອງທຶນຂອງລັດ;
5. ລາຍຈ່າຍອົງການບໍລິຫານວິຊາການ;
6. ລາຍຈ່າຍເງິນແຮລັດຖະບານ;
7. ລາຍຈ່າຍເຂົ້າຄັງສະສົມແຫ່ງລັດ;
8. ລາຍຈ່າຍລົງທຶນ ລວມມີ ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ທຶນສົມທົບບັນດາໂຄງການຊ່ວຍເຫຼືອລ້າ, ກູ້ຢືມ, ປະກອບທຶນຮ່ວມທຸລະກິດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງສູນກາງ;
9. ລາຍຈ່າຍຖົມຊຸມລາຄາ ແລະ ອັດຕາດອກເບ້ຍ ຕາມນະໂຍບາຍຂອງລັດຖະບານ;
10. ລາຍຈ່າຍໃຫ້ກູ້ຢືມຂອງລັດຖະບານ;
11. ລາຍຈ່າຍຊ່ວຍເຫຼືອລ້າ ;
12. ລາຍຈ່າຍອື່ນໆ ຕາມລະບຽບກົດໝາຍ.

**ມາດຕາ 42. ລາຍຈ່າຍງົບປະມານທ້ອງຖິ່ນ**

ລາຍຈ່າຍງົບປະມານທ້ອງຖິ່ນ ປະກອບມີ :

1. ລາຍຈ່າຍຮັບໃຊ້ວຽກງານບໍລິຫານຂອງອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນທ້ອງຖິ່ນ ;
2. ລາຍຈ່າຍໃຫ້ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນຄຸ້ມຄອງ ;
3. ລາຍຈ່າຍກອງທຶນຂອງລັດ ;

4. ລາຍຈ່າຍອີງການບໍລິຫານວິຊາການ ;
5. ລາຍຈ່າຍເງິນແຮທ້ອງຖິ່ນ ;
6. ລາຍຈ່າຍເຂົ້າຄັງສະສົມແຫ່ງລັດ ;
7. ລາຍຈ່າຍລົງທຶນ ລວມມີ ການກໍ່ສ້າງພື້ນຖານໂຄງລ່າງ, ທຶນສົມທົບບັນດາໂຄງການຊ່ວຍເຫຼືອລ້າ, ກູ້ຢືມ ທີ່ຂຶ້ນກັບທ້ອງຖິ່ນຄຸ້ມຄອງ ;
8. ລາຍຈ່າຍຊ່ວຍເຫຼືອລ້າ;
9. ລາຍຈ່າຍອື່ນໆ ຕາມລະບຽບກົດໝາຍ.

## ໝວດທີ 4
## ການຊ່ວຍໜູນງົບປະມານທ້ອງຖິ່ນ

### ມາດຕາ 43. ການຊ່ວຍໜຸນເພື່ອການດຸນດ່ຽງ

ໃນກໍລະນີທີ່ລາຍຮັບງົບປະມານຊຶ່ງເປັນພູດຮ້ອຍສ່ວນຮ້ອຍ (100%) ຂອງທ້ອງຖິ່ນ ບວກກັບລາຍຮັບພູດແບ່ງປັນ ຫາກບໍ່ພຽງພໍກັບລາຍຈ່າຍທີ່ສະພາແຫ່ງຊາດຮັບຮອງນັ້ນ ງົບປະມານສູນກາງຈະຊ່ວຍໜຸນໃຫ້ງົບປະມານທ້ອງຖິ່ນ ເພື່ອຮັບປະກັນລາຍຈ່າຍປະຈຳສົກປີ.

### ມາດຕາ 44. ການຊ່ວຍໜຸນງົບປະມານທີ່ມີເປົ້າໝາຍ

ນອກຈາກການຊ່ວຍໜູນໃຫ້ງົບປະມານທ້ອງຖິ່ນ ທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້ແລ້ວ ງົບປະມານສູນກາງຈະຊ່ວຍໜຸນໃຫ້ງົບປະມານທ້ອງຖິ່ນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍສະເພາະດັ່ງນີ້ :

1. ເພື່ອປະຕິບັດແຜນງານ, ໂຄງການລົງທຶນ ທີ່ກຳນົດໄວ້ໃນແຜນລວມປະຈຳສົກປີ ຊຶ່ງລັດຖະບານມອບເພີ່ມເຕີມໃຫ້;
2. ເພື່ອແກ້ໄຂບັນຫາສຸກເສີນ, ຮີບດ່ວນ ຊຶ່ງບໍ່ນອນໃນແຜນງົບປະມານປະຈຳສົກປີຂອງທ້ອງຖິ່ນຕາມການຕົກລົງຂອງລັດຖະບານ.

### ມາດຕາ 45. ນະໂຍບາຍສົ່ງເສີມການເກັບລາຍຮັບງົບປະມານ

ລັດປະຕິບັດນະໂຍບາຍສົ່ງເສີມການເກັບລາຍຮັບງົບປະມານດັ່ງນີ້ :

1. ໃນກໍລະນີທີ່ທ້ອງຖິ່ນເກັບລາຍຮັບທີ່ເປັນພູດຂອງຕົນ ຫາກໄດ້ລື່ນແຜນການ, ສ່ວນທີ່ລື່ນນັ້ນ ແມ່ນມອບໃຫ້ທ້ອງຖິ່ນນຳໃຊ້ທັງໝົດ ເພື່ອພັດທະນາທ້ອງຖິ່ນຂອງຕົນ;
2. ຖ້າພູດຂອງສູນກາງທີ່ປະຕິບັດຢູ່ທ້ອງຖິ່ນ ແລະ ພູດແບ່ງປັນລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຫາກເກັບໄດ້ລື່ນແຜນການ, ຈຳນວນລື່ນນັ້ນ ແມ່ນລັດຖະບານຈະເປັນຜູ້ຕົກລົງແບ່ງປັນໃຫ້ທ້ອງຖິ່ນ ຕາມອັດຕາສ່ວນທີ່ເໝາະສົມ.

### ມາດຕາ 46. ວິທີການແກ້ໄຂການເກັບລາຍຮັບທີ່ບໍ່ໄດ້ຕາມແຜນການ

ພາຍຫຼັງທີ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີ ເກີນຫົກເດືອນແລ້ວ ແຕ່ການເກັບລາຍຮັບບໍ່ໄດ້ຕາມແຜນການ ກະຊວງການເງິນເປັນເຈົ້າການຄົ້ນຄວ້າແຫຼ່ງເງິນ ສະເໜີລັດຖະບານຕົກລົງໃຫ້ກະຊວງການເງິນຊອກແຫຼ່ງທຶນມາດຸນດ່ຽງ ຫຼື ຕົກລົງຫຼຸດລາຍຈ່າຍງົບປະມານຂອງອົງການຈັດຕັ້ງລັດ ແລະອົງການຈັດຕັ້ງອື່ນ ຢູ່ສູນກາງ ແລະທ້ອງຖິ່ນລົງຕາມຈຳນວນເງິນທີ່ເກັບບໍ່ໄດ້ ເພື່ອຮັກສາລະດັບການດຸນດ່ຽງງົບປະມານປະຈຳສົກປີ ແລ້ວລາຍງານໃຫ້ສະພາແຫ່ງຊາດຊາບ.

ໃນກໍລະນີທີ່ການເກັບລາຍຮັບຫາກບໍ່ໄດ້ຕາມແຜນການປະຈຳສົກປີແຕ່ ຫ້າສ່ວນຮ້ອຍ ຂຶ້ນໄປ ກະຊວງການເງິນຕ້ອງສະເໜີລັດຖະບານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາດັດແກ້ແຜນງົບປະມານແຫ່ງລັດ.

## ພາກທີ V
## ການສ້າງ ແລະການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ

## ໝວດທີ 1
## ການສ້າງແຜນງົບປະມານແຫ່ງລັດ

### ມາດຕາ 47. ການສ້າງແຜນງົບປະມານແຫ່ງລັດ

ການສ້າງແຜນງົບປະມານແຫ່ງລັດປະຈຳສົກປີ ໃຫ້ປະຕິບັດດັ່ງນີ້ :

1. ຕ້ອງສ້າງບົນພື້ນຖານແຜນຍຸດທະສາດການເງິນ ໄລຍະກາງ, ໄລຍະຍາວ ທີ່ລັດຖະບານກຳນົດ ຕາມການຮັບຮອງຂອງສະພາແຫ່ງຊາດ ;
2. ຕ້ອງໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ ແລະແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ ໃນແຕ່ລະໄລຍະ ເພື່ອຮັບປະກັນສະເຖຍລະພາບ ທາງດ້ານການເງິນ ;
3. ຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ດ້ວຍການເຂົ້າຮ່ວມຂອງຄະນະສະມາຊິກສະພາແຫ່ງຊາດ ຢູ່ຂັ້ນທ້ອງຖິ່ນ ແລະຂອງກຳມາທິການຂອງສະພາແຫ່ງຊາດ ຢູ່ຂັ້ນສູນກາງ;
4. ຕ້ອງເລີ່ມຈາກຫົວໜ່ວຍຮາກຖານຂຶ້ນມາຕາມຄຳສັ່ງ, ຕົວເລກຊີ້ນຳ ຂອງລັດຖະບານ ແລະຄຳແນະນຳຂອງກະຊວງການເງິນ ;
5. ຕ້ອງຄິດໄລ່ສັງລວມແຜນງົບປະມານຕາມຂະແໜງການສາຍຕັ້ງ ເພື່ອຜ່ານສະພາແຫ່ງຊາດປະຈຳສົກປີ ສຳລັບບາງຂະແໜງການທີ່ເປັນບູລິມະສິດ ແລະບາງຂະແໜງການ ທີ່ຂຶ້ນກັບສາຍຕັ້ງ.

ການສ້າງແຜນລາຍຮັບງົບປະມານແຫ່ງລັດປະຈຳສົກປີ ໃຫ້ດຳເນີນບົນພື້ນຖານຄວາມອາດສາມາດຂຸດຄົ້ນ ແຫຼ່ງລາຍຮັບ ຈາກຫົວໜ່ວຍການຜະລິດ ແລະ ການບໍລິການ ໂດຍຄິດໄລ່ຕາມລະບຽບກົດໝາຍ.

ການສ້າງແຜນລາຍຈ່າຍງົບປະມານແຫ່ງລັດປະຈຳສົກປີ ໃຫ້ປະຕິບັດດັ່ງນີ້ :

1. ຕ້ອງຮັບປະກັນຄວາມຍຸຕິທຳ ແລະສະເໝີພາບ ໂດຍຄິດໄລ່ແບ່ງປັນ ຕາມກຳນົດໝາຍແບ່ງປັນລາຍຈ່າຍງົບປະມານ ທີ່ລັດຖະບານຮັບຮອງເອົາ ແຕ່ລະໄລຍະ ;
2. ຕ້ອງອີງຕາມຄວາມອາດສາມາດຂອງການເກັບລາຍຮັບ ແນໃສ່ຮັກສາລະດັບການຂາດດຸນໃຫ້ຢູ່ໃນລະດັບທີ່ເໝາະສົມ ແລະຮັບປະກັນສະເຖຍລະພາບທາງດ້ານເສດຖະກິດ-ການເງິນ.

**ມາດຕາ 48. ການປຶກສາຫາລືແຜນງົບປະມານແຫ່ງລັດ**

ໃນໄລຍະການສ້າງແຜນງົບປະມານ ຂະແໜງການການເງິນ ຕ້ອງປະຕິບັດໜ້າທີ່ດັ່ງນີ້ :

1. ປຶກສາຫາລືກັບບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າ, ກຳນົດຄວາມອາດສາມາດທາງດ້ານລາຍຮັບ-ລາຍຈ່າຍ ;
2. ສະເໜີວິທີການເພື່ອຮັບປະກັນການດຸນດ່ຽງລວມງົບປະມານ. ໃນເວລາປຶກສາຫາລື ຖ້າຫາກມີຄວາມຄິດຄວາມເຫັນແຕກຕ່າງກັນ ກະຊວງການເງິນຕ້ອງນຳສະເໜີນາຍົກລັດຖະມົນຕີ, ພະແນກການເງິນແຂວງ, ນະຄອນ ຕ້ອງນຳສະເໜີເຈົ້າແຂວງ, ເຈົ້າຄອງນະຄອນເພື່ອຂໍທິດຊີ້ນຳ ແລະຕົກລົງ.

**ມາດຕາ 49. ການສັງລວມແຜນງົບປະມານແຫ່ງລັດ**

ກະຊວງການເງິນເປັນຜູ້ສັງລວມແຜນລາຍຮັບ-ລາຍຈ່າຍງົບປະມານຂອງບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະທ້ອງຖິ່ນ ລວມທັງແຜນດຸນດ່ຽງງົບປະມານແຫ່ງລັດແລ້ວລາຍງານລັດຖະບານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງເອົາ.

**ມາດຕາ 50. ບັນດາເອກະສານທີ່ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ**

ບັນດາເອກະສານທີ່ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ ລວມມີ:

1. ບົດສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດຂາດຕົວງົບປະມານແຫ່ງລັດປະຈຳສົກປີຜ່ານມາ;
2. ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີ ;
3. ບົດສະເໜີຮ່າງແຜນລວມຍອດລາຍຮັບ ແລະລາຍຈ່າຍ, ລະດັບຂາດດຸນງົບປະມານແຫ່ງລັດປະຈຳສົກປີຕໍ່ໄປ;
4. ຕາຕະລາງຮ່າງແຜນລາຍຮັບ-ລາຍຈ່າຍງົບປະມານ ຂອງບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນ ຂັ້ນສູນກາງ ແລະທ້ອງຖິ່ນ;

5. ລາຍງານສະພາບໜີ້ສິນຂອງລັດ ທີ່ຮອດກຳນົດ, ກາຍກຳນົດຕ້ອງຊຳລະ, ຈຳນວນດອກເບ້ຍຕ້ອງຈ່າຍໃນປີ, ຄວາມສາມາດຊຳລະໃນປີ ແລະ ຍອດເຫຼືອໜີ້ຮອດທ້າຍປີ ;
6. ບັນຊີແຜນງານ ແລະ ໂຄງການລົງທຶນທີ່ສຳຄັນຂອງລັດຖະບານ.

**ມາດຕາ 51. ຂັ້ນຕອນ ແລະກຳນົດເວລາກ່ຽວກັບການສ້າງແຜນງົບປະມານແຫ່ງລັດ**

ການສ້າງແຜນງົບປະມານແຫ່ງລັດ ຕ້ອງປະຕິບັດຕາມຂັ້ນຕອນ ແລະກຳນົດເວລາດັ່ງນີ້ :

1. ໃນຕົ້ນເດືອນມັງກອນ ລັດຖະບານອອກຄຳສັ່ງກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດແລ້ວ ກະຊວງການເງິນອອກຄຳແນະນຳກ່ຽວກັບການສ້າງແຜນງົບປະມານແຫ່ງລັດປະຈຳສົກປີ ;
2. ບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ທ້ອງຖິ່ນ ສ້າງແຜນງົບປະມານຂອງຕົນ ດ້ວຍການເຂົ້າຮ່ວມຂອງຄະນະສະມາຊິກສະພາແຫ່ງຊາດ ແລ້ວພະແນກການເງິນແຂວງ, ນະຄອນ ສັງລວມເປັນແຜນງົບປະມານປະຈຳສົກປີຂອງທ້ອງຖິ່ນຕົນແລ້ວສົ່ງໃຫ້ກະຊວງການເງິນ ພາຍໃນ ເດືອນ ກຸມພາ ;
3. ບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ສ້າງແຜນງົບປະມານຂອງຕົນ ຊຶ່ງກຳມາທິການຂອງສະພາແຫ່ງຊາດມີສິດເຂົ້າຮ່ວມ ແລ້ວສົ່ງໃຫ້ກະຊວງການເງິນ ພາຍໃນເດືອນ ກຸມພາ ;
4. ກະຊວງການເງິນສັງລວມແຜນງົບປະມານແຫ່ງລັດ ຈາກບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະທ້ອງຖິ່ນ ດ້ວຍການເຂົ້າຮ່ວມຂອງກຳມາທິ ການຂອງສະພາແຫ່ງຊາດ ແລ້ວນຳສະເໜີລັດຖະບານ ພາຍໃນເດືອນ ເມສາ ;
5. ລັດຖະບານຄົ້ນຄວ້າ, ສັງລວມແຜນງົບປະມານແຫ່ງລັດ ແລ້ວສົ່ງຢ່າງເປັນທາງການໃຫ້ສະພາແຫ່ງຊາດ ສິບຫ້າວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ.

## ໝວດທີ 2
## ການພິຈາລະນາຮັບຮອງແຜນງົບປະມານແຫ່ງລັດ

**ມາດຕາ 52. ການພິຈາລະນາຮັບຮອງແຜນງົບປະມານແຫ່ງລັດ**

ກອງປະຊຸມສະໄໝສາມັນໃນເດືອນ ມິຖຸນາ ຫຼື ກໍລະກົດ ຂອງສະພາແຫ່ງຊາດ ພິຈາລະນາຮັບຮອງເອົາເນື້ອໃນຕ່າງໆຂອງແຜນງົບປະມານແຫ່ງລັດ ທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້.

**ມາດຕາ 53. ຂັ້ນຕອນການມອບແຜນງົບປະມານແຫ່ງລັດ**

ຂັ້ນຕອນການມອບແຜນງົບປະມານແຫ່ງລັດ ໃຫ້ປະຕິບັດດັ່ງນີ້:

1. ພາຍຫຼັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແຜນງົບປະມານປະຈຳສົກປີແລ້ວ ລັດຖະບານເປັນຜູ້ອອກດຳລັດວ່າດ້ວຍ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ພາຍໃນກຳນົດເວລາ ສິບຫ້າ ວັນ ;
2. ລັດຖະມົນຕີວ່າການກະຊວງການເງິນ ເປັນຜູ້ອອກແຈ້ງການ ແລະຄຳແນະນຳທາງດ້ານວິຊາການກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳສົກປີ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນລັດຖະບານອອກດຳລັດຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ເປັນຕົ້ນໄປ;
3. ບັນດາອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ມອບແຜນລາຍຮັບ ແລະລາຍຈ່າຍງົບປະມານ ໃຫ້ບັນດາກົມກອງ, ຂະແໜງການ ແລະ ຫົວໜ່ວຍຕ່າງໆທີ່ຂຶ້ນກັບຕົນ, ພ້ອມກັນນັ້ນ ກໍແຈ້ງໃຫ້ອົງການການເງິນ ແລະ ຄັງເງິນແຫ່ງຊາດທີ່ຕົນຂຶ້ນກັບ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດລາຍຮັບ ແລະລາຍຈ່າຍງົບປະມານ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນກະຊວງການເງິນອອກແຈ້ງການ ແລະຄຳແນະນຳເປັນຕົ້ນໄປ.

### ມາດຕາ 54. ການດັດແກ້ແຜນງົບປະມານແຫ່ງລັດ

ການດັດແກ້ແຜນງົບປະມານແຫ່ງລັດປະຈຳສົກປີ ສາມາດປະຕິບັດໄດ້ໜຶ່ງເທື່ອຕໍ່ປີ ແລະ ພາຍຫຼັງທີ່ໄດ້ຈັດຕັ້ງປະຕິບັດແຜນງົບປະມານ ໃນທຶກເດືອນຕົ້ນປີແລ້ວ ໃນກໍລະນີທີ່ມີການປ່ຽນແປງນະໂຍບາຍ ຫຼື ມີເຫດການໃດໜຶ່ງເກີດຂຶ້ນ ທີ່ບໍ່ໄດ້ຄາດຄະເນໄວ້ກ່ອນ ຊຶ່ງເປັນຜົນກະທົບເຖິງລາຍຮັບ ແລະລາຍຈ່າຍ ງົບປະມານແຫ່ງລັດປະຈຳສົກປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້.

ການດັດແກ້ແຜນງົບປະມານແຫ່ງລັດປະຈຳສົກປີ ໃຫ້ປະຕິບັດຄ້າຍຄືກັນກັບຂັ້ນຕອນການພິຈາລະນາຮັບຮອງເອົາແຜນງົບປະມານປະຈຳສົກປີ.

## ໝວດທີ 3
## ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ

### ມາດຕາ 55. ອົງການຈັດຕັ້ງເກັບລາຍຮັບ

ອົງການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ ປະກອບມີ:

1. ຂະແໜງການສ່ວຍສາອາກອນ;
2. ຂະແໜງການພາສີ;
3. ບັນດາອົງການຈັດຕັ້ງທີ່ລັດຖະບານອະນຸຍາດ ຫຼື ຖືກມອບສິດຈາກລັດຖະມົນຕີວ່າການກະຊວງການເງິນ ໃຫ້ເກັບລາຍຮັບ;
4. ບັນດາກອງທຶນ ແລະອົງການບໍລິຫານວິຊາການ ທີ່ລັດຖະບານອະນຸຍາດໃຫ້ສ້າງຕັ້ງ ແລະຖືກມອບສິດຈາກລັດຖະມົນຕີວ່າການກະຊວງການເງິນ ໃຫ້ເກັບລາຍຮັບ.

### ມາດຕາ 56. ຄວາມຮັບຜິດຊອບຂອງອົງການຈັດຕັ້ງເກັບລາຍຮັບ

ອົງການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ ມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້ :

1. ສ້າງແຜນເກັບລາຍຮັບ, ເກັບກຳຂໍ້ມູນສະຖິຕິຫົວໜ່ວຍໃຫ້ຄົບຖ້ວນ, ຄິດໄລ່ໃຫ້ມີຄວາມຊັດເຈນ ແລະ ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ເປີດເຜີຍ;
2. ເຜີຍແຜ່, ແນະນຳ ກ່ຽວກັບລະບຽບກົດໝາຍຂອງຂະແໜງການການເງິນ ໃຫ້ບັນດາເປົ້າໝາຍ ທີ່ມີໜ້າທີ່ມອບພັນທະເຂົ້າງົບປະມານ, ເພີ່ມທະວີການຝຶກອົບຮົມທາງດ້ານວິຊາສະເພາະ ເພື່ອຍົກລະດັບຄຸນນະພາບຂອງວຽກງານ ແລະຫຼຸດຜ່ອນຂັ້ນຕອນໃນການບໍລິການ ທີ່ມີຫຼາຍຂອດ;
3. ຈັດຕັ້ງ, ຄຸ້ມຄອງ ການເກັບລາຍຮັບສ່ວຍສາອາກອນ, ພາສີ, ລາຍຮັບຈາກຊັບສິນ, ຄ່າທຳນຽມ, ຄ່າບໍລິການຕ່າງໆ ແລະລາຍຮັບອື່ນໆໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ຄົບຖ້ວນ, ທັນກຳນົດເວລາ, ເປີດເຜີຍ ແລະ ໂປ່ງໃສ;
4. ເລັ່ງທວງ, ກ່າວເຕືອນ, ປັບໃໝ ເມື່ອພົບເຫັນອົງການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ມອບລາຍຮັບເຂົ້າງົບປະມານຊັກຊ້າ ໂດຍບໍ່ມີເຫດຜົນພຽງພໍ ແລະ ສະເໜີໃຫ້ດຳເນີນຄະດີຕາມຂະບວນການຍຸຕິທຳ ໃນກໍລະນີທີ່ມີການລະເມີດຢ່າງຮ້າຍແຮງ ;

ການປະຕິບັດສິດ ແລະໜ້າທີ່ຂອງອົງການຈັດຕັ້ງເກັບລາຍຮັບ ແມ່ນຢູ່ພາຍໃຕ້ການກວດກາຂອງອົງການກວດກາພາຍໃນ, ອົງການກວດກາພາຍນອກ ແລະຄະນະສະເພາະກິດທີ່ຖືກແຕ່ງຕັ້ງ ຈາກອົງການທີ່ມີສິດອຳນາດ.

### ມາດຕາ 57. ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ

ການຈ່າຍງົບປະມານແຫ່ງລັດ ຕ້ອງປະຕິບັດຕາມຫຼັກການ ແລະຂັ້ນຕອນ ການຄຸ້ມຄອງລາຍຈ່າຍດັ່ງນີ້:

- ຕ້ອງຢູ່ໃນແຜນງົບປະມານປະຈຳສົກປີ ;
- ຕ້ອງໄດ້ຮັບການອະນຸມັດ ;
- ໃຫ້ຖືກຕ້ອງຕາມເປົ້າໝາຍລາຍຈ່າຍ ;
- ຕ້ອງຄິດໄລ່ໃຫ້ຖືກຕ້ອງຕາມກຳນົດໝາຍການໃຊ້ຈ່າຍ ;
- ຕ້ອງໄດ້ຮັບອະນຸຍາດຈາກຜູ້ສັ່ງການ ຫຼື ຜູ້ຖືກມອບສິດ.

ໃນກໍລະນີທີ່ສະພາແຫ່ງຊາດ ຍັງບໍ່ທັນໄດ້ຮັບຮອງເອົາແຜນງົບປະມານປະຈຳສົກປີນັ້ນ ລັດຖະບານມີສິດອະນຸຍາດໃຫ້ຈ່າຍລ່ວງໜ້າໄດ້ເທົ່າກັບ 1/12 ຂອງຍອດລາຍຈ່າຍທີ່ປະຕິບັດໃນປີຜ່ານມາ ເພື່ອຈ່າຍເງິນເດືອນ, ເງິນນະໂຍບາຍ, ລາຍຈ່າຍບໍລິຫານ ແລະລາຍຈ່າຍຊຳລະໜີ້ຕ່າງປະເທດ ທີ່ຮອດກຳນົດສັນຍາ.

ການເບີກຈ່າຍງົບປະມານ ຕ້ອງໃຫ້ຖືກຮ່ວງສາລະບານລາຍຈ່າຍ ທີ່ໄດ້ກຳນົດໃນແຜນການປີ, ການຈົດກ່າຍໃຫ້ໄປຕາມສາລະບານງົບປະມານ ແລະ ການບັນຊີ ແຫ່ງລັດ.

ການຈັດຊື້, ການຈັດຈ້າງ, ການບໍລິການ ແລະ ການກໍ່ສ້າງ-ສ້ອມແປງ ດ້ວຍທຶນຂອງລັດ ຕ້ອງຜ່ານຂັ້ນຕອນ ແລະຮູບການປະມູນ ແລະປະກອບເອກະສານໃຫ້ຄົບຖ້ວນ ຕາມລະບຽບການ.

ການຈ່າຍງົບປະມານປີໃດ ຕ້ອງໄດ້ນຳໃຊ້ແຫຼ່ງລາຍຮັບງົບປະມານປີນັ້ນ ແຕ່ການຊຳລະກໍສາມາດດຳເນີນໄປໄດ້ອີກສາມເດືອນ ພາຍຫຼັງປິດບັນຊີເກັບລາຍຮັບໃນສົກປີງົບປະມານນັ້ນແລ້ວ ເພື່ອໃຫ້ຄັງເງິນແຫ່ງຊາດ ສາມາດສະຫຼຸບຂາດຕົວເປັນແຕ່ລະປີ.

ການນຳໃຊ້ເງິນງົບປະມານແຫ່ງຊາດເພື່ອຊຳລະລາຍຈ່າຍ ແມ່ນປະຕິບັດຕາມຮູບການຕ່າງໆເຊັ່ນ: ການໂອນບັນຊີ, ການຈ່າຍເປັນເງິນສົດ, ເປັນແຊັກ ແລະ ການເປີດຈົດໝາຍສິນເຊື່ອ.

## ມາດຕາ 58. ຄວາມຮັບຜິດຊອບຂອງ ຜູ້ສັ່ງການເອກ

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ຜູ້ສັ່ງການເອກ ມີຄວາມຮັບຜິດຊອບ ຕົ້ນຕໍດັ່ງນີ້ :

1. ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີ ;
2. ຈັດຕັ້ງ, ຄຸ້ມຄອງການເກັບລາຍຮັບໃຫ້ໄດ້ຕາມແຜນການ ແລະ ລື່ນແຜນການ;
3. ປະຕິບັດລາຍຈ່າຍຕາມແຜນງົບປະມານປະຈຳປີທີ່ລັດຖະບານມອບໃຫ້;
4. ສັ່ງການໃຫ້ອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະທ້ອງຖິ່ນ ແກ້ໄຂ ເມື່ອກວດກາເຫັນການເກັບລາຍຮັບບໍ່ຖືກຕ້ອງຕາມລະບຽບກົດໝາຍ, ການປະຕິບັດລາຍຈ່າຍບໍ່ໄປຕາມລະບຽບຄຸ້ມຄອງລາຍຈ່າຍ ;
5. ສັ່ງມອບລາຍຮັບ ທີ່ຢູ່ນອກລະບົບໃຫ້ລວມສູນເຂົ້າງົບປະມານແຫ່ງລັດ ແລະ ຈັດສັນລາຍຮັບ ເພື່ອຕອບສະໜອງລາຍຈ່າຍໃນແຜນປະຈຳສົກປີ ເພື່ອຮັບປະກັນໃຫ້ຜູ້ສັ່ງການສາມາດຖອນລາຍຈ່າຍໃນແຜນການ ໄດ້ຢ່າງຄົບຖ້ວນ ແລະທັນກຳນົດເວລາ;
6. ອອກຄຳສັ່ງຈ່າຍເງິນໃນແຜນງົບປະມານແຫ່ງລັດປະຈຳສົກປີ ໃນຂອບເຂດທົ່ວປະເທດຕາມຕົວເລກມອບໝາຍຂອງລັດຖະບານ.

ການປະຕິບັດສິດ ແລະໜ້າທີ່ຂອງຜູ້ສັ່ງການເອກ ແມ່ນຢູ່ພາຍໃຕ້ການກວດກາຂອງລັດຖະບານ, ສະພາແຫ່ງຊາດ, ອົງການທີ່ມີສິດໜ້າທີ່ກວດກາ ແລະຄະນະສະເພາະກິດ.

## ມາດຕາ 59. ຄວາມຮັບຜິດຊອບຂອງຜູ້ສັ່ງການ

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ຜູ້ສັ່ງການ ມີຄວາມຮັບຜິດຊອບ ຕົ້ນຕໍດັ່ງນີ້ :

1. ຈັດຕັ້ງປະຕິບັດແຜນງົບປະມານໃນສ່ວນທີ່ຕົນຮັບຜິດຊອບ ;
2. ເກັບລາຍຮັບໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ຄົບຖ້ວນ, ທັນກຳນົດເວລາ, ເປີດເຜີຍ ແລະໂປ່ງໃສ;
3. ສູ້ຊົນເກັບລາຍຮັບໃຫ້ໄດ້ຕາມແຜນການ ຫຼື ລື່ນແຜນການ ;
4. ປະຕິບັດລາຍຈ່າຍງົບປະມານແຫ່ງລັດໃຫ້ຖືກຕ້ອງຕາມເປົ້າໝາຍ, ຕາມສາລະບານງົບປະມານ ແລະການຂໍຈ່າຍງົບປະມານຕ້ອງປະກອບເອກະສານໃຫ້ຄົບຖ້ວນ;

5. ຈັດກ່າຍຕາມລະບຽບກົດໝາຍການບັນຊີແຫ່ງລັດ, ຄິດໄລ່ໃຫ້ຖືກຕ້ອງຕາມ ກຳນົດໝາຍໃຊ້ຈ່າຍ.

ການປະຕິບັດສິດ ແລະໜ້າທີ່ຂອງຜູ້ສັ່ງການ ແມ່ນຢູ່ພາຍໃຕ້ການກວດກາຂອງກະຊວງການເງິນ, ອົງການທີ່ມີສິດໜ້າທີ່ກວດກາ ແລະຄະນະສະເພາະກິດ.

### ມາດຕາ 60. ຄວາມຮັບຜິດຊອບຂອງຄັງເງິນແຫ່ງຊາດ

ໃນວຽກງານການເງິນ ແລະງົບປະມານແຫ່ງລັດ ຄັງເງິນແຫ່ງຊາດ ມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

1. ປະຕິບັດແຜນງົບປະມານ ແຫ່ງລັດ, ຄຸ້ມຄອງ, ຕິດຕາມ, ຈັດກ່າຍ, ບັນທຶກລາຍຮັບ ແລະລາຍຈ່າຍງົບປະມານແຫ່ງລັດ ຕາມແຜນທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ, ຮຽກເກັບລາຍຮັບເຂົ້າຄັງເງິນແຫ່ງຊາດ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
2. ໂຈະການເຄື່ອນໄຫວບັນຊີເງິນຝາກຂອງລູກຄ້າ ຢູ່ໃນລະບົບຄັງເງິນແຫ່ງຊາດ ແລະສະເໜີໃຫ້ທະນາຄານ ໂຈະການເຄື່ອນໄຫວບັນຊີເງິນຝາກຂອງລູກຄ້າ ຕາມການສະເໜີຂອງອົງການຈັດຕັ້ງເກັບລາຍຮັບ;
3. ແຍກປະເພດລາຍຮັບງົບປະມານ ທີ່ເປັນພູດຂອງສູນກາງມອບເຂົ້າບັນຊີສູນກາງ, ລາຍຮັບພູດຂອງທ້ອງຖິ່ນ ມອບເຂົ້າບັນຊີທ້ອງຖິ່ນ ແລະພູດແບ່ງປັນລະຫວ່າງສູນກາງ ແລະທ້ອງຖິ່ນຕ້ອງມອບຕາມອັດຕາສ່ວນແບ່ງປັນທີ່ລັດຖະບານຕົກລົງໃນແຕ່ລະໄລຍະ;
4. ກວດກາທຸກຮ່ວງລາຍຈ່າຍງົບປະມານແຫ່ງລັດ ກ່ອນການເບີກຈ່າຍເງິນອອກຈາກຄັງເງິນ, ກວດກາການປະຕິບັດສິດຂອງຜູ້ສັ່ງການ, ກວດກາຄວາມຖືກຕ້ອງຂອງເອກະສານຂໍຈ່າຍເງິນ. ໃນກໍລະນີທີ່ກວດກາເຫັນວ່າຜູ້ສັ່ງການ ສັ່ງຈ່າຍເງິນບໍ່ຖືກຕ້ອງຕາມລະບຽບກົດໝາຍ ກໍມີສິດ ແນະນຳຢ່າງທັນການ ເພື່ອແກ້ໄຂໃຫ້ຖືກຕ້ອງ;
5. ຄຸ້ມຄອງຄັງງົບປະມານແຫ່ງລັດ, ກອງທຶນຂອງລັດ, ຂອງອົງການບໍລິຫານວິຊາການ, ເງິນຊ່ວຍເຫຼືອລ້າ ແລະເງິນກູ້ຢືມ, ເງິນຝາກຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງລວມທັງບັນຊີເງິນຝາກຂອງລັດວິສາຫະກິດ, ຂອງບຸກຄົນ ແລະການຈັດຕັ້ງ;
6. ເປີດບັນຊີເງິນຝາກຢູ່ທະນາຄານຕາມລະບຽບກົດໝາຍ ແລະຕາມການຕົກລົງຂອງລັດຖະບານ.

### ມາດຕາ 61. ການບັນຊີ ແລະ ສາລະບານງົບປະມານແຫ່ງລັດ

ລາຍຮັບ ແລະລາຍຈ່າຍງົບປະມານແຫ່ງລັດທັງໝົດ ຕ້ອງໄດ້ຈັດກ່າຍຕາມລະບົບການບັນຊີແຫ່ງລັດ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍກ່ຽວກັບການບັນຊີ ແລະສາລະບານງົບປະມານແຫ່ງລັດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

### ມາດຕາ 62. ການຄຸ້ມຄອງໜີ້ສິນພາຍໃນ ແລະ ຕ່າງປະເທດ

ການຄຸ້ມຄອງໜີ້ສິນພາຍໃນ ແລະ ຕ່າງປະເທດ ມີດັ່ງນີ້:

1. ລັດຖະບານ ຕ້ອງຄຸ້ມຄອງໜີ້ສິນຕາມການຕົກລົງຂອງສະພາແຫ່ງຊາດເປັນແຕ່ລະປີ, ຄວບຄຸມຍອດໜີ້ ໂດຍອີງຕາມຖານະການເງິນຂອງປະເທດ ທີ່ສາມາດຊຳລະຕົ້ນທຶນ ແລະ ດອກເບັ້ຍ, ເປົ້າໝາຍການລົງທຶນທີ່ຈຳເປັນ, ການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ, ແຜນງົບປະມານແຫ່ງລັດປະຈຳສົກປີ, ແຜນຍຸດທະສາດການເງິນໄລຍະກາງ ແລະ ໄລຍະຍາວ;
2. ລັດຖະບານບໍ່ອະນຸຍາດໃຫ້ບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງຢູ່ສູນກາງ ແລະທ້ອງຖິ່ນ ສ້າງໜີ້ສິນຈາກການຈ່າຍນອກແຜນ ຫຼື ຈ່າຍເກີນແຜນງົບປະມານແຫ່ງລັດ ;
3. ໜີ້ສິນທີ່ລັດຖະບານ ຮັບຮູ້ຕ້ອງໄດ້ຈັດເຂົ້າໃນແຜນງົບປະມານໄລຍະກາງ, ໄລຍະຍາວ ແລະ ແຜນງົບປະມານປະຈຳສົກປີ ເພື່ອຊຳລະ.

## ມາດຕາ 63. ການກູ້ຢືມເງິນ

ການກູ້ຢືມເງິນແມ່ນເພື່ອດຸນດ່ຽງງົບປະມານປະຈຳສົກປີ ເປັນແຫຼ່ງເງິນສຳລັບການລົງທຶນ ແລະຕ້ອງໄດ້ໃຊ້ແທນດອກເບັ້ຍ, ຕົ້ນທຶນຄືນແກ່ຜູ້ໃຫ້ກູ້ຢືມ.

ວິທີການກູ້ຢືມເງິນ ແມ່ນໃຫ້ປະຕິບັດດັ່ງນີ້:

1. ການກູ້ຢືມເງິນຈາກແຫຼ່ງພາຍໃນ ແລະຕ່າງປະເທດ ຕ້ອງໄດ້ລວມສູນຢູ່ໃນແຜນງົບປະມານແຫ່ງລັດໄລຍະກາງ, ໄລຍະຍາວ ແລະແຜນງົບປະມານປະຈຳສົກປີ ໂດຍຈົດເຂົ້າໃນລະບົບບັນຊີຄັງເງິນແຫ່ງຊາດ;
2. ການກູ້ຢືມເງິນຕ້ອງຜ່ານປະຕູດຽວ ຢູ່ກະຊວງການເງິນ ຊຶ່ງເປັນເສນາທິການໃຫ້ລັດຖະບານໃນການຄຸ້ມຄອງການກູ້ຢືມ ແລະນຳໃຊ້ເງິນກູ້ຢືມ.

ໃນການຄຸ້ມຄອງການກູ້ຢືມເງິນນັ້ນ ກະຊວງການເງິນຕ້ອງໄດ້ຄົ້ນຄວ້າຄວາມອາດສາມາດໃຊ້ແທນທັງດອກເບັ້ຍ ແລະຕົ້ນທຶນຄືນ ເພື່ອສະເໜີໃຫ້ລັດຖະບານນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງ.

## ມາດຕາ 64. ການຊ່ວຍເຫຼືອລ້າ

ການຊ່ວຍເຫຼືອລ້າ ແມ່ນໃຫ້ປະຕິບັດດັ່ງນີ້ :

1. ລາຍຮັບຊ່ວຍເຫຼືອລ້າທັງໝົດຈາກພາຍໃນ ແລະຕ່າງປະເທດ ຕ້ອງຈົດ ຫຼື ມອບເຂົ້າງົບປະມານແຫ່ງລັດ ແລະເປີດບັນຊີຄຸ້ມຄອງໃນລະບົບຄັງເງິນແຫ່ງຊາດ ສຳລັບການຊ່ວຍເຫຼືອລ້າທີ່ໄດ້ມອບເຂົ້າງົບປະມານ;
2. ສຳລັບການຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ຕິດພັນກັບໂຄງການ ແມ່ນມອບສິດໃຫ້ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງຂັ້ນສູນກາງ ແລະທ້ອງຖິ່ນ ພົວພັນ ແລະ ເຈລະຈາກັບຜູ້ໃຫ້ທຶນ ດ້ວຍການເຂົ້າຮ່ວມຂອງຂະແໜງການການເງິນ;

3. ສຳລັບການຊ່ວຍເຫຼືອລ້າຈາກພາຍໃນປະເທດ ແມ່ນອະນຸຍາດໃຫ້ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຂັ້ນສູນກາງ ແລະທ້ອງຖິ່ນ ພົວພັນ ແລະ ເຈລະຈາ ໂດຍກົງກັບຜູ້ໃຫ້ທຶນ.

**ມາດຕາ 65. ການດັດສະເລ່ຍລາຍຈ່າຍງົບປະມານແຫ່ງລັດ**

ເມື່ອການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຫາກບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ຕ້ອງມີການດັດສະເລ່ຍລາຍຈ່າຍງົບປະມານດັ່ງນີ້:

1. ປ່ຽນລາຍຈ່າຍງົບປະມານຈາກຮ່ວງໜຶ່ງໄປໃສ່ຮ່ວງອື່ນໃນພາກດຽວກັນ ທີ່ຢູ່ໃນແຜນງົບປະມານປະຈຳສົກປີ ຊຶ່ງຜູ້ສັ່ງການ ເປັນຜູ້ຕົກລົງ;
2. ປ່ຽນລາຍຈ່າຍງົບປະມານຈາກພາກໜຶ່ງໄປໃສ່ພາກອື່ນ ທີ່ຢູ່ໃນແຜນງົບປະມານປະຈຳສົກປີ ຊຶ່ງຜູ້ສັ່ງການເອກ ເປັນຜູ້ຕົກລົງ ;
3. ປ່ຽນລາຍຈ່າຍງົບປະມານຈາກອົງການຈັດຕັ້ງໜຶ່ງໄປໃສ່ອົງການຈັດຕັ້ງອື່ນ, ຈາກທ້ອງຖິ່ນໜຶ່ງໄປໃສ່ທ້ອງຖິ່ນອື່ນ ທີ່ຢູ່ໃນແຜນງົບປະມານປະຈຳສົກປີ ຊຶ່ງນາຍົກລັດຖະມົນຕີ ເປັນຜູ້ຕົກລົງ.

## ໝວດທີ 4
## ການປິດບັນຊີ ແລະ ການສະຫຼຸບຂາດຕົວງົບປະມານແຫ່ງລັດ

**ມາດຕາ 66. ການປິດ ແລະສະຫຼຸບ ບັນຊີງົບປະມານແຫ່ງລັດ**

ອົງການຈັດຕັ້ງເກັບລາຍຮັບທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້ ແລະອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ຕ້ອງປິດ ແລະສະຫຼຸບບັນຊີງົບປະມານຂອງຕົນ ຕາມລະບຽບກົດໝາຍ.

ສ່ວນບັນດາວິສາຫະກິດ ຕ້ອງປິດ ແລະສະຫຼຸບບັນຊີ ການເຄື່ອນໄຫວທຸລະກິດຂອງຕົນ ປະຈຳສົກປີ ຕາມລະບຽບກົດໝາຍ ກ່ຽວກັບການບັນຊີ.

**ມາດຕາ 67. ການປິດຮັບເອກະສານ ກ່ຽວກັບ ລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ**

ຄັງເງິນແຫ່ງຊາດ ເປັນຜູ້ປິດຮັບເອກະສານຂອງບັນດາອົງການຈັດຕັ້ງທີ່ມີສິດສັ່ງມອບລາຍຮັບ ແລະເອກະສານຂໍເບີກຈ່າຍງົບປະມານແຫ່ງລັດ ຂອງຜູ້ມີສິດສັ່ງຈ່າຍ ໃນວັນທີ 30 ກັນຍາ.

**ມາດຕາ 68. ກຳນົດເວລາສັງລວມລາຍຮັບ-ລາຍຈ່າຍ**

ການສະຫຼຸບສັງລວມລາຍຮັບ-ລາຍຈ່າຍ ຕ້ອງປະຕິບັດຕາມກຳນົດເວລາດັ່ງນີ້:

- ສະຫຼຸບສັງລວມລາຍຮັບທີ່ເກັບໄດ້ຕົວຈິງໃນສົກປີງົບປະມານຈົນຮອດວັນທີ 30 ກັນຍາ;

- ສະຫຼຸບສັງລວມການເບີກຈ່າຍງົບປະມານຜ່ານມາ, ໃບຂໍຖອນ, ຄໍາສັ່ງຈ່າຍທີ່ຄ້າງຈ່າຍ ຈົນຮອດວັນທີ 30 ກັນຍາ ແລະດໍາເນີນການຊໍາລະລາຍຈ່າຍສົກປີ ພາຍໃນເກົ້າສິບວັນ ຈົນຮອດວັນທີ 31 ທັນວາ;
- ລາຍຮັບ, ລາຍຈ່າຍງົບປະມານແຫ່ງລັດສົກປີໃດ ຕ້ອງເປີດບັນຊີຕິດຕາມ ແລະ ສະຫຼຸບສະເພາະສົກປີນັ້ນ.

**ມາດຕາ 69. ກໍານົດເວລາລາຍງານສະພາບງົບປະມານ**

ການລາຍງານສະພາບງົບປະມານ ໃຫ້ປະຕິບັດ ຕາມກໍານົດເວລາດັ່ງນີ້ :

1. ພາຍໃນຊາວວັນ ນັບແຕ່ມື້ປິດບັນຊີງົບປະມານໃນສົກປີເປັນຕົ້ນໄປ ຄັງເງິນແຫ່ງຊາດ ຕ້ອງສະຫຼຸບສັງລວມລາຍຮັບ ແລະລາຍຈ່າຍ ທີ່ໄດ້ປະຕິບັດຜ່ານມາ, ຍອດເງິນຄ້າງຄັງ, ໜີ້ຕ້ອງຮັບຕາມໃບສັ່ງມອບ, ໜີ້ຕ້ອງສົ່ງຕາມໃບສັ່ງຈ່າຍ ແລ້ວລາຍງານໃຫ້ກະຊວງການເງິນ;
2. ພາຍໃນສິບວັນ ນັບແຕ່ມື້ໄດ້ຮັບລາຍງານຈາກຄັງເງິນແຫ່ງຊາດ ເປັນຕົ້ນໄປ ກະຊວງການເງິນຕ້ອງລາຍງານສະພາບຈັດຕັ້ງປະຕິບັດງົບປະມານເບື້ອງຕົ້ນ ໃຫ້ລັດຖະບານ.

**ມາດຕາ 70. ການປິດສະຫຼຸບຂາດຕົວງົບປະມານແຫ່ງລັດ**

ການປິດສະຫຼຸບຂາດຕົວງົບປະມານແຫ່ງລັດ ແມ່ນກໍານົດເອົາວັນທີ 31 ທັນວາ. ຄັງເງິນແຫ່ງຊາດປະຈໍາຢູ່ສູນກາງ ແລະທ້ອງຖິ່ນ ຕ້ອງສະຫຼຸບລາຍຮັບ, ລາຍຈ່າຍງົບປະມານຂາດຕົວ ໂດຍປະສານສົມທົບກັບຫົວໜ່ວຍງົບປະມານແຕ່ລະຂັ້ນ ເພື່ອລາຍງານໃຫ້ຂັ້ນເທິງຂອງຕົນ. ຕົວເລກສະຫຼຸບງົບປະມານຂອງຫົວໜ່ວຍງົບປະມານນັ້ນ ຕ້ອງໄດ້ສົມທຽບ ແລະໄດ້ຮັບການຢັ້ງຢືນຈາກຄັງເງິນທີ່ຕົນໃຊ້ບໍລິການ ແລະຮັບປະກັນເງື່ອນໄຂດັ່ງນີ້ :

- ລາຍຮັບທີ່ມອບເກີນຈໍານວນທີ່ຕ້ອງຮັບຕາມລະບຽບກົດໝາຍ ຕ້ອງໄດ້ສົ່ງສ່ວນເກີນນັ້ນ ຄືນໃຫ້ແກ່ຜູ້ມອບໃນສົກປີງົບປະມານ;
- ລາຍຈ່າຍທີ່ບໍ່ຖືກຕ້ອງຕາມກົດໝາຍກໍານົດໄວ້ຕ້ອງສົ່ງຄືນເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ.

**ມາດຕາ 71. ການກໍານົດມື້ສະຫຼຸບຂາດຕົວງົບປະມານແຫ່ງລັດ**

ການກໍານົດມື້ສະຫຼຸບຂາດຕົວງົບປະມານແຫ່ງລັດ ຕ້ອງປະຕິບັດດັ່ງນີ້ :

1. ຜູ້ສັ່ງການຕ້ອງໄດ້ກວດກາ, ພິຈາລະນາຄວາມຖືກຕ້ອງຂອງບົດສະຫຼຸບລາຍງານງົບປະມານແຫ່ງລັດ ແລະ ສົ່ງໃຫ້ກະຊວງການເງິນ ຢ່າງຊ້າບໍ່ໃຫ້ກາຍວັນທີ 30 ມັງກອນ ;
2. ກະຊວງການເງິນ ຕ້ອງສັງລວມການສະຫຼຸບງົບປະມານແຫ່ງລັດປະຈໍາສົກປີແລ້ວ ສະເໜີໃຫ້ລັດຖະບານພິຈາລະນາຮັບຮອງເອົາ ພາຍຫຼັງທີ່ມີການກວດກາ ແລະຢັ້ງຢືນຂອງອົງການກວດສອບແຫ່ງລັດ ກ່ອນວັນທີ 30 ມີນາ ;

3. ລັດຖະບານ ຄົ້ນຄວ້າ ແລະ ພິຈາລະນາຮ່າງບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳສົກປີ ແລ້ວສົ່ງຢ່າງເປັນທາງການໃຫ້ສະພາແຫ່ງຊາດ ສິບຫ້າວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ.

**ມາດຕາ 72. ການພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວງົບປະມານແຫ່ງລັດ**

ການພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ຕ້ອງປະຕິບັດ ດັ່ງນີ້ :

1. ກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດສົກປີຜ່ານມາ ເປັນແຕ່ລະອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະທ້ອງຖິ່ນ ;
2. ຜ່ານການຄົ້ນຄວ້າພິຈາລະນາຕົວເລກລາຍຮັບ, ລາຍຈ່າຍ, ແຫຼ່ງດຸນດ່ຽງ ແລະ ບັນຊີໜີ້ສິນຕ່າງໆ ຖ້າເຫັນວ່າການຈັດຕັ້ງປະຕິບັດບໍ່ຖືກຕາມແຜນງົບປະມານ ທີ່ໄດ້ຮັບຮອງເອົາໃນສົກປີແລ້ວ ສະພາແຫ່ງຊາດມີສິດກວດກາຄືນຄວາມຮັບຜິດຊອບຂອງລັດຖະບານ, ຜູ້ສັ່ງການເອກ, ຜູ້ສັ່ງການ ແລະ ຫົວໜ່ວຍງົບປະມານແຕ່ລະຂັ້ນ.

## ພາກທີ VI
## ການຄຸ້ມຄອງ ແລະກວດກາ ງົບປະມານແຫ່ງລັດ

### ໝວດທີ 1
### ການຄຸ້ມຄອງ ງົບປະມານແຫ່ງລັດ

**ມາດຕາ 73.** ອົງການຄຸ້ມຄອງງົບປະມານແຫ່ງລັດ

ອົງການຄຸ້ມຄອງງົບປະມານແຫ່ງລັດ ປະກອບດ້ວຍ :

1. ກະຊວງການເງິນ ;
2. ພະແນກການເງິນແຂວງ, ນະຄອນ ;
3. ຫ້ອງການການເງິນເມືອງ, ເທດສະບານ ;
4. ບັນດາຫົວໜ່ວຍງົບປະມານແຫ່ງລັດ.

**ມາດຕາ 74. ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງງົບປະມານແຫ່ງລັດ ກະຊວງການເງິນ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ສ້າງແຜນຍຸດທະສາດ, ນະໂຍບາຍການເງິນ ໄລຍະກາງ ແລະໄລຍະຍາວຂອງຂະແໜງການການເງິນແຫ່ງລັດ ;

2. ສ້າງຮ່າງກົດໝາຍ, ນິຕິກຳອື່ນໃນຂົງເຂດການເງິນ, ງົບປະມານ ເຊັ່ນ : ກຳນົດໝາຍແບ່ງປັນງົບປະມານ, ກຳນົດໝາຍການໃຊ້ຈ່າຍງົບປະມານແຫ່ງລັດ ເພື່ອສະເໜີລັດຖະບານ ພິຈາລະນາ ;
3. ສ້າງຮ່າງແຜນງົບປະມານແຫ່ງລັດປະຈຳສົກປີ ແລ້ວສະເໜີລັດຖະບານພິຈາລະນາ ;
4. ໂຄສະນາເຜີຍແຜ່ກົດໝາຍ ແລະນິຕິກຳອື່ນໆ ກ່ຽວກັບວຽກງານການເງິນ-ງົບປະມານແຫ່ງລັດ ຕາມພາລະບົດບາດຂອງຕົນ ;
5. ຊີ້ນຳ, ຕິດຕາມ ແລະກວດກາການຈັດຕັ້ງເກັບລາຍຮັບຕາມຕົວເລກທີ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ ແລະຕາມການມອບໝາຍຂອງລັດຖະບານ ;
6. ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດລາຍຈ່າຍໃຫ້ໄປຕາມແຜນການສົກປີ, ຕາມລະບຽບກົດໝາຍ, ວິໄນການເງິນຢ່າງເຂັ້ມງວດ ;
7. ເປັນເຈົ້າການປະສານສົມທົບກັບບັນດາອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ໃນການສ້າງບັນດາກຳນົດໝາຍການແບ່ງປັນລາຍຈ່າຍງົບປະມານ, ການແບ່ງປັນລາຍຮັບ ແລະລາຍຈ່າຍ, ສ້າງລະບຽບການບັນຊີ ແລະສາລະບານງົບປະມານ ເພື່ອຄຸ້ມຄອງ, ປິດບັນຊີງົບປະມານ ແລະການເປີດເຜີຍງົບປະມານ ແລ້ວນຳສະເໜີລັດຖະບານ ພິຈາລະນາຕົກລົງ;
8. ສັງລວມແຜນງົບປະມານ, ຕີລາຄາສະພາບການຈັດຕັ້ງປະຕິບັດ ແລະສ້າງບົດສະຫຼຸບງົບປະມານປະຈຳສົກປີ ;
9. ເປັນເຈົ້າການໃນການພົວພັນ, ຮ່ວມມືກັບອົງການຈັດຕັ້ງການເງິນຕ່າງປະເທດ, ອົງການການເງິນສາກົນ, ອົງການຈັດຕັ້ງອື່ນທີ່ມີສ່ວນພົວພັນກັບວຽກງານການເງິນ, ສ້າງຮ່າງສັນຍາກູ້ຢືມ, ຊ່ວຍເຫຼືອລ້າກັບຕ່າງປະເທດ ແລະບັນດາສະຖາບັນການເງິນສາກົນ ເພື່ອນຳສະເໜີລັດຖະບານ ພິຈາລະນາ ;
10. ຄຸ້ມຄອງເງິນກູ້ຢືມ, ເງິນຊ່ວຍເຫຼືອລ້າ ແລະ ປະຕິບັດການຊຳລະໜີ້ສິນຂອງລັດຖະບານຕາມທີ່ໄດ້ກຳນົດໄວ້ໃນສັນຍາ ;
11. ຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງ, ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດໃນຂອບເຂດທົ່ວປະເທດ, ກວດກາບັນດາຫົວໜ່ວຍວິສາຫະກິດ, ທຸລະກິດທັງພາກລັດ ແລະພາກເອກະຊົນ, ຫົວໜ່ວຍງົບປະມານ, ກອງທຶນຂອງລັດ, ອົງການບໍລິຫານວິຊາການແຕ່ລະຂັ້ນ ໃນການປະຕິບັດພັນທະເຂົ້າງົບປະມານ ;
12. ຄຸ້ມຄອງຄັງງົບປະມານ, ຄັງສະສົມການເງິນແຫ່ງຊາດ, ກອງທຶນຂອງລັດ, ຊັບສິນ, ໜີ້ສິນ ແລະ ວັດຖຸມີຄ່າຂອງລັດ ;
13. ຊີ້ນຳວຽກງານວິຊາສະເພາະ, ຄຸ້ມຄອງ ແລະ ສ້າງບຸກຄະລາກອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດນະໂຍບາຍ ຫຼື ວິໄນຕໍ່ພະນັກງານທີ່ຂຶ້ນກັບຕົນ; ສະໜອງງົບປະມານ

ແລະປະກອບພາຫະນະ, ອຸປະກອນເຕັກນິກ ຮັບໃຊ້ກິຈັກພາສີ, ສ່ວຍສາອາກອນ, ຄັງເງິນແຫ່ງຊາດ ລວມສູນຕາມສາຍຕັ້ງ .

**ມາດຕາ 75. ສິດ ແລະ ໜ້າທີ່ ຂອງພະແນກການເງິນແຂວງ, ນະຄອນ**

ໃນການຄຸ້ມຄອງແຜນງົບປະມານແຫ່ງລັດ ພະແນກການເງິນ ແຂວງ, ນະຄອນ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ແລະປະກອບຄຳເຫັນໃສ່ບັນດາຮ່າງກົດໝາຍ, ນິຕິກຳອື່ນໆໃນຂົງເຂດການເງິນ-ງົບປະມານແຫ່ງລັດ ;
2. ເປັນເຈົ້າການສ້າງ, ສັງລວມ, ຈັດແບ່ງແຜນງົບປະມານ, ແນະນຳການຈັດຕັ້ງປະຕິບັດ ແລະ ສະຫຼຸບງົບປະມານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ກະຊວງການເງິນ ຕາມກຳນົດເວລາ ;
3. ຮັບຜິດຊອບຕໍ່ອົງການປົກຄອງແຂວງ, ນະຄອນ ແລະ ກະຊວງການເງິນ ໃນການຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດເກັບລາຍຮັບໃຫ້ໄດ້ຄົບຖ້ວນ, ຖືກຕ້ອງຕາມລະບຽບກົດໝາຍ ແລະ ປະຕິບັດລາຍຈ່າຍຕາມແຜນງົບປະມານປະຈຳສົກປີ ;
4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ກວດກາການປະຕິບັດໜ້າທີ່ຂອງພະນັກງານການເງິນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ;
5. ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ ແລະ ນິຕິກຳອື່ນໆ ທີ່ພົວພັນກັບວຽກງານການເງິນ ແລະງົບປະມານ ;
6. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອນຳສະເໜີຕໍ່ລັດຖະມົນຕີວ່າການກະຊວງການເງິນພິຈາລະນາຍ້ອງຍໍຜູ້ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດລະບຽບກົດໝາຍ ;
7. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອນຳສະເໜີຕໍ່ລັດຖະມົນຕີວ່າການກະຊວງການເງິນ ພິຈາລະນາກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງພະນັກງານການເງິນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

**ມາດຕາ 76. ສິດ ແລະ ໜ້າທີ່ ຂອງຫ້ອງການການເງິນເມືອງ, ເທດສະບານ**

ໃນການຄຸ້ມຄອງແຜນງົບປະມານແຫ່ງລັດ ຫ້ອງການການເງິນເມືອງ, ເທດສະບານ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບັນດາຮ່າງກົດໝາຍ, ນິຕິກຳອື່ນໆໃນຂົງເຂດການເງິນ-ງົບປະມານແຫ່ງລັດ ;
2. ເປັນເຈົ້າການສ້າງ, ສັງລວມ, ຈັດແບ່ງແຜນງົບປະມານ, ແນະນຳການຈັດຕັ້ງປະຕິບັດ ແລະ ສະຫຼຸບງົບປະມານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ພະແນກການເງິນແຂວງ, ນະຄອນ ຕາມກຳນົດເວລາ ;

3. ຮັບຜິດຊອບຕໍ່ອົງການປົກຄອງເມືອງ, ເທດສະບານ ແລະ ພະແນກການເງິນແຂວງ, ນະຄອນ ໃນການຄຸ້ມຄອງ ແລະກວດກາການຈັດຕັ້ງປະຕິບັດເກັບລາຍຮັບໃຫ້ໄດ້ຄົບຖ້ວນ, ຖືກຕ້ອງ ຕາມລະບຽບກົດໝາຍ ແລະ ປະຕິບັດລາຍຈ່າຍຕາມແຜນງົບປະມານປະຈຳສົກປີ ;
4. ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ ແລະນິຕິກຳອື່ນໆ ທີ່ພົວພັນກັບວຽກງານການເງິນ ແລະງົບປະມານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະກວດກາການຈັດຕັ້ງປະຕິບັດໜ້າທີ່ຂອງພະນັກງານການເງິນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

**ມາດຕາ 77. ສິດ ແລະ ໜ້າທີ່ ຂອງຫົວໜ່ວຍງົບປະມານ**

ໃນການຄຸ້ມຄອງແຜນງົບປະມານແຫ່ງລັດ ຫົວໜ່ວຍງົບປະມານ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້ :

1. ສ້າງຮ່າງແຜນການງົບປະມານ ແລະຈັດແບ່ງແຜນລາຍຮັບ-ລາຍຈ່າຍງົບປະມານປະຈຳສົກປີ ພ້ອມທັງມອບຕົວເລກແຜນການດັ່ງກ່າວ ໃຫ້ກົມກອງ ແລະຫົວໜ່ວຍງົບປະມານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາເຜີຍແຜ່ລະບຽບກົດໝາຍ ກ່ຽວກັບການເງິນ-ງົບປະມານ, ແນະນຳການຄຸ້ມຄອງການເງິນ, ການຖືບັນຊີ, ການຈົດກ່າຍ ໃຫ້ຖືກຕ້ອງຕາມລະບຽບການບັນຊີ ;
3. ຈັດຕັ້ງປະຕິບັດແຜນງົບປະມານລາຍຮັບ ແລະລາຍຈ່າຍທີ່ໄດ້ຮັບມອບໝາຍ, ເກັບລາຍຮັບໃຫ້ຄົບຖ້ວນ, ທັນກຳນົດເວລາ, ໄລ່ລຽງລາຍຈ່າຍໃຫ້ມີປະສິດທິຜົນ, ນຳໃຊ້ໃຫ້ຖືກເປົ້າໝາຍ, ປະຢັດມັດທະຍັດ ແລະຖືກຕ້ອງຕາມລະບຽບກົດໝາຍ;
4. ປະຕິບັດລະບຽບກົດໝາຍໃຫ້ຖືກຕ້ອງ, ເຂັ້ມງວດ ແລະຕາມແຜນງົບປະມານແຫ່ງລັດປະຈຳສົກປີ ໃນການຈັດຊື້ສິນຄ້າ, ການຈັດຈ້າງ ແລະການບໍລິການ ດ້ວຍການນຳໃຊ້ງົບປະມານແຫ່ງລັດ;
5. ຖືບັນຊີ ແລະ ຈົດກ່າຍໃຫ້ຖືກຕ້ອງຕາມລະບຽບກົດໝາຍການບັນຊີ, ຕາມສາລະບານງົບປະມານ ;
6. ປະສານສົມທົບກັບຄັງເງິນແຫ່ງຊາດ ສົມທຽບຕົວເລກການປະຕິບັດລາຍຮັບ ແລະລາຍຈ່າຍງົບປະມານ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດງົບປະມານ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ທັນກຳນົດເວລາ.

## ໝວດທີ 2
## ການກວດກາ ງົບປະມານແຫ່ງລັດ

**ມາດຕາ 78. ຄວາມສຳຄັນຂອງການກວດກາງົບປະມານແຫ່ງລັດ**

ການກວດກາງົບປະມານແຫ່ງລັດມີຄວາມສຳຄັນ ເພື່ອເຮັດໃຫ້ການຄຸ້ມຄອງງົບປະມານແຫ່ງລັດຖືກຕ້ອງ ຕາມລະບຽບກົດໝາຍ, ມີຄວາມໂປ່ງໃສ ທັງຮັບປະກັນໃຫ້ມີການປະຢັດ ແລະມີປະສິດທິຜົນ.

**ມາດຕາ 79. ຫຼັກການໃນການກວດກາງົບປະມານແຫ່ງລັດ**

ໃນການກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຫຼັກການຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຍຸຕິທຳ, ເປີດເຜີຍ, ໂປ່ງໃສ ແລະເອກະພາບ ;
2. ບຸກຄົນ ແລະນິຕິບຸກຄົນ ທີ່ຖືກກວດກາ ຕ້ອງໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະເອກະສານຕ່າງໆ ທີ່ຈຳເປັນໃຫ້ອົງການກວດກາ.

**ມາດຕາ 80. ອົງການກວດກາງົບປະມານແຫ່ງລັດ**

ອົງການກວດກາງົບປະມານແຫ່ງລັດປະກອບດ້ວຍ: ອົງການກວດກາພາຍໃນ ແລະອົງການກວດກາພາຍນອກ.

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 73 ຂອງກົດໝາຍສະບັບນີ້ ແລະອົງການກວດກາຂອງຂະແໜງການທີ່ກ່ຽວຂ້ອງ;
2. ອົງການກວດກາພາຍນອກ ມີຄື :
   - ສະພາແຫ່ງຊາດ;
   - ລັດຖະບານ;
   - ຄະນະກຳມະການກວດກາ;
   - ອົງການກວດສອບແຫ່ງລັດ ;
   - ຄະນະກວດກາສະເພາະກິດ.

**ມາດຕາ 81. ສິດ ແລະໜ້າທີ່ ຂອງອົງການກວດກາພາຍໃນ**

ອົງການກວດກາພາຍໃນ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ, ການປະຕິບັດໜ້າທີ່ ແລະຄວາມຮັບຜິດຊອບຂອງເຈົ້າໜ້າທີ່ການເງິນແຕ່ລະຂັ້ນທີ່ຕົນຮັບຜິດຊອບ ເປັນຕົ້ນແມ່ນການສ້າງແຜນງົບປະມານ, ການເກັບລາຍຮັບ, ການປະຕິບັດລາຍຈ່າຍ, ການນຳໃຊ້ຊັບສິນຂອງລັດ, ການຈັດຊື້, ການຈັດຈ້າງ ແລະການບໍລິການທີ່ນຳໃຊ້ງົບປະມານແຫ່ງລັດ.

ລັດຖະບານ ເປັນຜູ້ກຳນົດລະບຽບການລະອຽດກ່ຽວກັບສິດ ແລະໜ້າທີ່ ຂອງອົງການກວດກາພາຍໃນຕໍ່ຂະແໜງການການເງິນ.

**ມາດຕາ 82. ສິດ ແລະໜ້າທີ່ ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີສິດ ແລະໜ້າທີ່ ກວດກາການປະຕິບັດໜ້າທີ່ ຂອງພະນັກງານການເງິນຂັ້ນຕ່າງໆ ລວມທັງກວດກາການຈັດຕັ້ງປະຕິບັດກົດໝາຍງົບປະມານຂອງອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນ ຢູ່ສູນກາງ ແລະທ້ອງຖິ່ນ ທີ່ນຳໃຊ້ງົບປະມານແຫ່ງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ວຽກງານການເງິນມີປະສິດທິພາບ, ມີຄວາມ ໂປ່ງໃສ ແລະຍຸຕິທຳ.

**ມາດຕາ 83. ເນື້ອໃນ ແລະ ເປົ້າໝາຍກວດກາງົບປະມານແຫ່ງລັດ**

ການກວດກາງົບປະມານແຫ່ງລັດ ມີເນື້ອໃນ ແລະ ເປົ້າໝາຍ ດັ່ງນີ້ :

1. ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະນິຕິກຳອື່ນ ກ່ຽວກັບການເງິນ-ງົບປະມານ, ກວດກາການເກັບລາຍຮັບ, ການປະຕິບັດລາຍຈ່າຍ ຕາມແຜນງົບປະມານແຫ່ງລັດ;
2. ກວດກາການປະຕິບັດສິດ ແລະຄວາມຮັບຜິດຊອບຂອງຜູ້ສັ່ງການເອກ, ຜູ້ສັ່ງການ, ຄັງເງິນແຫ່ງຊາດ, ຫົວໜ່ວຍງົບປະມານຂັ້ນຕ່າງໆ ແລະຂະແໜງການຄຸ້ມຄອງງົບປະມານ ກ່ຽວກັບການຈັດຕັ້ງປະຕິບັດງົບປະມານແຫ່ງລັດ;
3. ກວດກາຄວາມຮັບຜິດຊອບຂອງອົງການຈັດຕັ້ງເກັບລາຍຮັບ ແລະ ອົງການຄຸ້ມຄອງງົບປະມານແຫ່ງລັດ ຕາມລະບຽບກົດໝາຍ.

ການກວດກາລາຍຈ່າຍງົບປະມານ ໃຫ້ປະຕິບັດ ສາມຂັ້ນຕອນດັ່ງນີ້ : ການກວດກາກ່ອນຈ່າຍ, ການກວດກາຢູ່ໃນໄລຍະຈັດຕັ້ງປະຕິບັດ ແລະ ການກວດກາຫຼັງຈ່າຍ.

**ມາດຕາ 84. ຮູບການກວດກາ**

ການກວດກາງົບປະມານແຫ່ງລັດ ປະກອບດ້ວຍສາມຮູບການຄື :

- ການກວດກາຕາມລະບົບປົກກະຕິ;
- ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະມີກຳນົດເວລາອັນແນ່ນອນ ;

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ ;

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດການັ້ນ ອົງການກວດກາຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 85. ນະໂຍບາຍຕໍ່ຜູ້ມີຜົນງານ**

ອົງການຈັດຕັ້ງເກັບລາຍຮັບ, ຫົວໜ່ວຍງົບປະມານ ແລະພະນັກງານ ທີ່ໄດ້ຮັບຜິດຊອບຄຸ້ມຄອງການເກັບລາຍຮັບຢ່າງຖືກຕ້ອງ, ຄົບຖ້ວນ, ທັນກຳນົດເວລາ, ໄດ້ຕາມແຜນການ ຫຼື ລື່ນແຜນການ, ຄຸ້ມຄອງລາຍ

ຈ່າຍຢ່າງເປີດເຜີຍ , ໂປ່ງໃສ, ປະຢັດ ແລະມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບກົດໝາຍ.

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ມອບພັນທະເຂົ້າງົບປະມານແຫ່ງລັດຢ່າງຖືກຕ້ອງ, ຄົບຖ້ວນ, ທັນກຳນົດເວລາ, ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ກ່ຽວກັບການລະເມີດລະບຽບກົດໝາຍ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ ສາມາດເກັບລາຍຮັບໄດ້ເພີ່ມ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຢ່າງເໝາະສົມ.

## ມາດຕາ 86. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ເຊັ່ນ : ມາດຕະການສຶກສາອົບຮົມ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ແລະດຳເນີນຄະດີທາງອາຍາ ຕາມລະບຽບກົດໝາຍ.

## ມາດຕາ 87. ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ການຈັດຕັ້ງ ຊຶ່ງມີການກະທຳທີ່ບໍ່ເປັນອັນຕະລາຍ ຫຼື ບໍ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກສຶກສາອົບຮົມໃນກໍລະນີດັ່ງນີ້ :

1. ການສ້າງແຜນ, ການສະຫລຸບງົບປະມານປະຈຳປີບໍ່ຊັດເຈນ ແລະບໍ່ທັນກຳນົດເວລາ;
2. ການສົມທົບກັບບຸກຄົນ, ນັກທຸລະກິດ ເພື່ອໃຫ້ແກ່ຍາວເວລາມອບ ຫຼື ບໍ່ໃຫ້ມອບພັນທະເຂົ້າງົບປະມານ;
3. ການອອກຄຳສັ່ງຈ່າຍບໍ່ຖືກເປົ້າໝາຍ, ບໍ່ຖືກເນື້ອໃນລາຍຈ່າຍທີ່ກຳນົດໃນແຜນການສົກປີ, ຈ່າຍບໍ່ຖືກຮ່ວງ ຕາມສາລະບານງົບປະມານ, ຄິດໄລ່ບໍ່ຖືກຕ້ອງຕາມກຳນົດໝາຍໃຊ້ຈ່າຍ ໂດຍບໍ່ເຈດຕະນາ;
4. ການບໍ່ແຈ້ງຖານະການເງິນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນຢ່າງເປີດເຜີຍ, ໂປ່ງໃສ, ການສ້າງແຜນ, ການຈັດຕັ້ງປະຕິບັດ ແລະສະຫຼຸບງົບປະມານບໍ່ທັນກຳນົດເວລາ ;
5. ການຕອບຄຳສະເໜີ, ການອະນຸມັດ, ການສັ່ງຈ່າຍເງິນ ໂດຍແກ່ຍາວເວລາ ແລະຮຽກຮ້ອງຄ່າຕອບແທນ;
6. ການເບີກຈ່າຍງົບປະມານບໍ່ມີຄວາມຍຸຕິທຳເຊັ່ນ: ຜູ້ມາກ່ອນໄດ້ຕາມຫຼັງ, ຜູ້ມາຕາມຫຼັງ ພັດໄດ້ກ່ອນ, ຜູ້ມີຄວາມຈຳເປັນຕ້ອງແກ້ ພັດບໍ່ແກ້, ການເຮັດເອກະສານຕົກເຮ່ຍເສຍຫາຍ ໂດຍບໍ່ເຈດຕະນາ;
7. ການສ້າງຄວາມຫຍຸ້ງຍາກ ແລະການສະແດງທ່າທີ່ບໍ່ເໝາະສົມຕໍ່ຜູ້ມາໃຊ້ບໍລິການເຊັ່ນ: ບໍ່ແນະນຳ, ບໍ່ອະທິບາຍ, ໃຊ້ວາຈາ ທ່າທີບໍ່ສຸພາບ;
8. ການປະຕິບັດວິໃນຕໍ່ພະນັກງານບໍ່ເປັນທຳ ຫຼື ບໍ່ເຂັ້ມງວດ.

## ມາດຕາ 88. ມາດຕະການປັບໃໝ

ບຸກຄົນ ຫຼື ການຈັດຕັ້ງ ຈະຖືກປັບໃໝ ຫາກມີການກະທຳໃນກໍລະນີດັ່ງນີ້:

1. ການສືບຕໍ່ລະເມີດການກະທຳທີ່ໄດ້ກຳນົດໄວ້ໃນມາດຕາ 87 ເທິງນີ້ ;
2. ການບໍ່ແຈ້ງຂໍ້ມູນຫົວໜ່ວຍທຸລະກິດ, ເກັບພັນທະບໍ່ຍຸຕິທຳ, ບໍ່ເປີດເຜີຍຂໍ້ມູນເກັບພັນທະ, ບໍ່ແກ້ໄຂການສະເໜີຂອງຫົວໜ່ວຍທຸລະກິດ;
3. ການເກັບລາຍຮັບຈາກຫົວໜ່ວຍທຸລະກິດ ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຕາມລະບຽບກົດໝາຍ ເຮັດໃຫ້ພັນທະຕ້ອງມອບເຂົ້າງົບປະມານນັ້ນຫຼຸດລົງ ;
4. ການບໍ່ປະຕິບັດຕາມມາດຕະຖານ ຫຼື ເງື່ອນໄຂທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍເຊັ່ນ: ບໍ່ຖືບັນຊີ, ບໍ່ນຳໃຊ້ໃບເກັບເງິນ, ບໍ່ແຕ່ງຕັ້ງຫົວໜ້າການເງິນ, ບໍ່ແຕ່ງຕັ້ງນາຍຄັງເງິນສົດ, ບໍ່ປະກອບອຸປະກອນຮັບໃຊ້ຕາມມາດຕະຖານທຸລະກິດ, ບໍ່ແຈ້ງສະພາບການດຳເນີນທຸລະກິດ, ບໍ່ລາຍງານ ຖານະການເງິນປະຈຳເດືອນ, ງວດ ແລະ ປີ ໃຫ້ກະຊວງການເງິນ ຫຼື ຂະແໜງການທີ່ກ່ຽວຂ້ອງ.

ສຳລັບອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 89. ມາດຕະການທາງອາຍາ**

ບຸກຄົນໃດທີ່ໄດ້ກະທຳຜິດ ກ່ຽວກັບການເງິນ-ງົບປະມານ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍຕາມກົດໝາຍ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 90. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 91. ຜົນສັກສິດ**

ກົດໝາຍສະບັບນີ້ປ່ຽນແທນກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 05/1994/ສພຊ ລົງວັນທີ 18 ກໍລະກົດ 1994 ແລະ ມີຜົນສັກສິດພາຍຫຼັງ ສອງຮ້ອຍເຈັດສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ